# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

09-16 ມີນາ 2026
ປີທີ 15
ສະບັບທີ 1057
ລາຍສັບປະດາ


## ຮອງປະທານສະພາແຫ່ງຊາດ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທູດໄທ ປະຈຳ ສປປລາວ



(ສພຊ) - ວັນທີ 10 ມີນານີ້ ທີ່ສະພາແຫ່ງຊາດ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ນາງ ຄຣອງຂະນິດ ຣັກຈະເລີນ ໃນໂອກາດທີ່ມາປະຕິບັດໜ້າທີ່ເປັນເອກອັກຄະລາຊະທູດວິສາມັນຜູ້ມີອຳນາດເຕັມແຫ່ງ ລາຊະອານາຈັກໄທ ຄົນໃໝ່ ປະຈຳ ສປປລາວ; ໃນການພົບປະ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ສະແດງ

ອ່ານຕໍ່ໜ້າ 2



ແນວຄິດປະທານ
### ໄກສອນ ພົມວິຫານ
ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ຕ້ອງແກ້ໄຂສະພາວະທີ່ວ່າ ພາຍຫຼັງທີ່ຖືກເລືອກຕັ້ງຂຶ້ນມາແລ້ວ ຜູ້ແທນພັດເຮັດແຕ່ວຽກວິຊາສະເພາະ, ຖືເບົາ ຫຼື ບໍ່ເຮັດໜ້າທີ່ຂອງຜູ້ແທນ, ບໍ່ຮ່ວມຢ່າງສະໝໍ່າສະເໝີ ແລະ ໝົດຈິດໝົດໃຈໃນກອງປະຊຸມວາລະຕ່າງໆ, ບໍ່ຕ້ອນຮັບປະຊາຊົນ.

(ນິພົນເລືອກເຟັ້ນ ເຫຼັ້ມ 4, ໜ້າ 207)

ການເຄື່ອນໄຫວຂອງຜູ້ແທນ ຕ້ອງເລີ່ມຈາກຜົນປະໂຫຍດລວມຂອງປະເທດ ພ້ອມກັນນັ້ນ ກໍເອົາໃຈໃສ່ຢ່າງເໝາະສົມເຖິງຜົນປະໂຫຍດຂອງທ້ອງຖິ່ນທີ່ໄດ້ເລືອກຕັ້ງຕົນຂຶ້ນມາ ແລະ ຫົວໜ່ວຍວຽກງານທີ່ຕົນສັງກັດຢູ່.

(ນິພົນເລືອກເຟັ້ນ ເຫຼັ້ມ 4, ໜ້າ 206)

ພົນລະເມືອງທຸກຄົນ ມີສິດເສລີພາບ ແລະ ປະຊາທິປະໄຕຢ່າງແທ້ຈິງ ໃນການເລືອກເອົາຜູ້ທີ່ເປັນຕົວແທນ ຜູ້ເໝາະສົມຂອງຕົນ ເຂົ້າໃນອົງການຕົວແທນຂອງປະຊາຊົນ.

(ນິພົນເລືອກເຟັ້ນ ເຫຼັ້ມ 4, ໜ້າ 198)

ອ່ານຕໍ່ສະບັບໜ້າ

## ທູດທີ່ຈະໄປປະຕິບັດໜ້າທີ່ຢູ່ຕ່າງປະເທດເຂົ້າຢ້ຽມຂໍ່ານັບປະທານ ກຕທ



(ສພຊ) - ວັນທີ 6 ມີນາຜ່ານມາ, ທ່ານ ສັນຍາ ປຣະເສີດກຳມະການຄະນະປະຈຳສະພາແຫ່ງຊາດ (ສພຊ), ປະທານກຳມາທິການການຕ່າງປະເທດ (ກຕທ) ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ໄມບົວ ໄຊຍະວົງ ເອກອັກຄະລັດຖະທູດ

ອ່ານຕໍ່ໜ້າ 3

## ສັງລວມຜົນການຕິດຕາມກວດກາການປະຕິບັດດຳລັດເລກທີ 315/ລບ



(ສພຊ) - ວັນທີ 11 ມີນາຜ່ານມາ ທີ່ສະພາແຫ່ງຊາດ ໄດ້ມີກອງປະຊຸມສັງລວມຜົນການຕິດຕາມກວດກາການຈັດຕັ້ງປະຕິບັດດຳລັດເລກທີ315/ລບ, ລົງວັນທີ 16 ສິງຫາ 2016 ວ່າດ້ວຍການຄຸ້ມຄອງ ແລະ ປົກປ້ອງການເຄື່ອນໄຫວສາສະໜາ

ອ່ານຕໍ່ໜ້າ 3

## ຄະນະຜູ້ແທນສະມາຄົມມິດຕະພາບລາວ-ມຽນມາ ເຄື່ອນໄຫວວຽກງານຢູ່ມຽນມາ



ອ່ານຕໍ່ໜ້າ 3

## ສະຫະພັນແມ່ຍິງ ສພຊ ທັດສະນະສຶກສາຢູ່ເມືອງນາຊາຍທອງ




(ສພຊ)-ເພື່ອຮັດແໜ້ນຄວາມສາມັກຄີລະຫວ່າງສະຫະພັນແມ່ຍິງສະພາແຫ່ງຊາດ(ສພຊ) ແລະ ສະຫະພັນແມ່ຍິງເມືອງນາຊາຍທອງ ທັງເປັນການສະເຫຼີມສະຫຼອງວັນແມ່ຍິງສາກົນ ຄົບຮອບ 116 ປີ (8 ມີນາ 1910-8 ມີນາ 2026) ໃຫ້ເປັນຂະບວນຟົດຟື້ນ; ວັນທີ 13 ມີນາຜ່ານມາ, ສະຫະພັນແມ່ຍິງສະພາແຫ່ງຊາດ ນຳພາໂດຍທ່ານ ນາງ ວິໄຊ ສຣິດທິຣາດ ຮອງປະທານກຳມາທິການແຜນການ, ການ

ອ່ານຕໍ່ໜ້າ 3

## ຮຽບຮຽງເນື້ອໃນນິຕິກຳຂອງຄະນະປະຈຳສະພາແຫ່ງຊາດ



(ສພຊ) - ວັນທີ 4-6 ມີນານີ້ ທີ່ເມືອງວັງວຽງ ແຂວງວຽງຈັນ, ຫ້ອງວ່າການສະພາແຫ່ງຊາດ ໄດ້ຈັດກອງປະຊຸມຮຽບຮຽງເນື້ອໃນຮ່າງນິຕິກຳ 4 ສະບັບ ຂອງຄະນະປະຈຳສະພາແຫ່ງຊາດໂດຍການເປັນປະທານຂອງທ່ານສິງຄຳວົງພະຈັນຮອງ

ອ່ານຕໍ່ໜ້າ 2



ສຳເລັດການລົງຄະແນນ... (ໜ້າ 8)



ສິ່ງທີ່ຄວນຮູ້... (ໜ້າ 11)

ເຝົ້າເບິ່ງ ໄດ້ຍິນຮອບ
ວິເສດ ສະແຫວງສຶກສາ

ມາດຕະຖານ... (ໜ້າ 12)



## ຮອງປະທານ...

(ຕໍ່ຈາກໜ້າ 1)

ຄວາມຍິນດີ ແລະ ຊົມເຊີຍ ຕໍ່ການຖືກແຕ່ງຕັ້ງເປັນເອກອັກຄະລາຊະທູດແຫ່ງລາຊະອານາຈັກໄທ ປະຈຳ ສປປລາວ ພ້ອມທັງສະແດງຄວາມເຊື່ອໝັ້ນວ່າທ່ານທູດຈະປະຕິບັດໜ້າທີ່ເປັນຂົວຕໍ່ທີ່ດີໃຫ້ແກ່ການພົວພັນຮ່ວມມືລະຫວ່າງສອງປະເທດເວົ້າລວມ, ເວົ້າສະເພາະ ລະຫວ່າງສອງອົງການນິຕິບັນຍັດ ເພື່ອເສີມຂະຫຍາຍການພົວພັນການເປັນຄູ່ຮ່ວມຍຸດທະສາດເພື່ອການຈະເລີນເຕີບໂຕ ແລະ ການພັດທະນາແບບຍືນຍົງລະຫວ່າງສອງປະເທດ.

ທ່ານນາງຄຣອງຂະນິດ ຈະເລີນລັກ ໄດ້ສະແດງຄວາມຂອບໃຈເປັນຢ່າງສູງທີ່ທ່ານຮອງປະທານສະພາແຫ່ງຊາດ ໄດ້ໃຫ້ການຕ້ອນຮັບການເຂົ້າຢ້ຽມຂ່ຳນັບເຊິ່ງເປັນອົງການທຳອິດຂອງລາວທີ່ໄດ້ຮັບຕ້ອນຫຼັງຈາກຍື່ນສານຕາຕັ້ງຕໍ່ປະທານປະເທດແຫ່ງ ສປປລາວ ເມື່ອວັນທີ 17 ກຸມພາຜ່ານມາ; ພ້ອມດຽວກັນນີ້, ກໍໄດ້ຕີລາຄາສູງຕໍ່ການພົວພັນຮ່ວມມືລະຫວ່າງສອງປະເທດໃນຂົງເຂດຕ່າງໆ; ຕີລາຄາສູງຕໍ່ການຮ່ວມມືລະຫວ່າງລັດຖະສະພາໄທ ແລະ ສະພາແຫ່ງຊາດລາວ ໃນໄລຍະຜ່ານມາ ໂດຍໄດ້ມີການແລກປ່ຽນຢ້ຽມຢາມເຊິ່ງກັນແລະກັນຂອງຄະນະຜູ້ແທນຂັ້ນສູງ ແລະ ຂັ້ນຕ່າງໆ, ແລກປ່ຽນຂໍ້ມູນຂ່າວສານໃນຂົງເຂດນິຕິບັນຍັດທີ່ສອງຝ່າຍມີຄວາມສົນໃຈຮ່ວມກັນ. ພິເສດ, ທ່ານເອກອັກຄະລາຊະທູດ ໄດ້ແຈ້ງໃຫ້ຊາບວ່າ ໃນວັນທີ 16-18 ມີນາທີ່ຈະມາເຖິງນີ້ພະບາດສົມເດັດພະເຈົ້າຢູ່ຫົວ ແລະ ສົມເດັດພະນາງເຈົ້າພະລາຊິນີ ແຫ່ງ ລາຊະອານາຈັກໄທ ຈະໄດ້ສະເດັດມາຢ້ຽມຢາມລັດຖະກິດທີ່ສປປລາວຢ່າງເປັນທາງການພາຍຫຼັງ 32 ປີທີ່ພະບາດສົມເດັດພະເຈົ້າຢູ່ຫົວລາຊະການທີ 9 ມາຢ້ຽມຢາມ ສປປລາວ ໃນປີ 1994.

ທ່ານຮອງປະທານສະພາແຫ່ງຊາດ ໄດ້ຕີລາຄາສູງຕໍ່ສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມ ລະຫວ່າງ ສປປລາວ ແລະລາຊະອານາຈັກໄທ ທີ່ໄດ້ຮັບການເສີມຂະຫຍາຍຢ່າງຕໍ່ເນື່ອງຕະຫຼອດມາ ຈົນໄດ້ຍົກລະດັບຂຶ້ນເປັນຄູ່ຮ່ວມຍຸດທະສາດເພື່ອຄວາມຈະເລີນເຕີບໂຕ ແລະການພັດທະນາແບບຍືນຍົງ ໃນເດືອນມິຖຸນາ 2022; ສອງຝ່າຍມີການແລກປ່ຽນຢ້ຽມຢາມ ແລະໄປມາຫາສູ່ກັນຢ່າງປົກກະຕິ, ມີການຮ່ວມມືກັນໃນຫຼາຍຂົງເຂດ ເປັນຕົ້ນແມ່ນການຮ່ວມມືໃນຂົງເຂດເສດຖະກິດ, ການຄ້າ-ການລົງທຶນ, ດ້ານພື້ນຖານໂຄງລ່າງ ແລະ ການທ່ອງທ່ຽວ, ການບໍລິການ. ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຍັງໄດ້ຕີລາຄາສູງຕໍ່ການຮ່ວມມືລະຫວ່າງສະພາແຫ່ງຊາດລາວ ແລະ ລັດຖະສະພາໄທໃນໄລຍະຜ່ານມາເຊິ່ງໄດ້ມີການແລກປ່ຽນຢ້ຽມຢາມຂອງຄະນະຜູ້ແທນຂັ້ນຕ່າງໆນຳກັນ, ຮ່ວມກັນຈັດຕັ້ງປະຕິບັດບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມື ທີ່ໄດ້ລົງນາມຮ່ວມກັນໃນເດືອນທັນວາ2022 ລະຫວ່າງສອງອົງການນິຕິບັນຍັດ.

ໃນຕອນທ້າຍ, ທ່ານຮອງປະທານສະພາແຫ່ງຊາດ ໄດ້ສະແດງຄວາມຂອບໃຈຢ່າງຈິງໃຈຕໍ່ລັດຖະບານ, ລັດຖະສະພາ ແລະ ປະຊາຊົນໄທ ທີ່ໄດ້ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫຼືອ ສປປລາວ ໃນໄລຍະຜ່ານມາ ພິເສດແມ່ນການສະໜັບສະໜູນຈາກລັດຖະສະພາ ແລະລັດຖະບານໄທ ໃຫ້ແກ່ສະພາແຫ່ງຊາດລາວ ໃນການເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ45ທີ່ສະພາແຫ່ງຊາດລາວເປັນເຈົ້າພາບໃນປີ 2024.

# ພິທີມອບ-ຮັບເງິນໃຫ້ສະພາແຫ່ງຊາດ



(ສພຊ) - ຕອນບ່າຍວັນສຸກທີ 6 ມີນານີ້ ທີ່ສະພາແຫ່ງຊາດ (ສພຊ) ໄດ້ຈັດພິທີມອບ-ຮັບເງິນ 50 ລ້ານກີບ ເພື່ອນຳໃຊ້ເຂົ້າໃນວຽກງານລວມຂອງ ສພຊ, ຕາງໜ້າມອບໂດຍທ່ານ ນາງ ເຜັດສະໝອນ ແສງຈັນ ຮອງຫົວໜ້າຫ້ອງການທະນາຄານແຫ່ງ ສປປລາວ ແລະ ຮັບໂດຍທ່ານ ນາງ ເຂັມພອນ ພຸດທະພັນ ຮອງຫົວໜ້າກົມການເງິນ ເຊິ່ງມີພາກສ່ວນກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ; ໂອກາດດັ່ງກ່າວ, ທ່ານ ນາງ ເຂັມພອນ ພຸດທະພັນ ໄດ້ມອບໃບຍ້ອງຍໍຂອງຄະນະປະຈຳສະພາແຫ່ງຊາດ ໃຫ້ທະນາຄານແຫ່ງ ສປປລາວ ທີ່ມີຜົນງານດີເດັ່ນໃນການປະກອບສ່ວນອຸປະຖຳໃນຄັ້ງນີ້ ເພື່ອເປັນການສັນລະເສີນຜົນງານ ແລະ ຄຸນງາມຄວາມດີຢ່າງສົມກຽດ.



## ຮຽບຮຽງ...

(ຕໍ່ຈາກໜ້າ 1)

ຫົວໜ້າຫ້ອງວ່າການສະພາແຫ່ງຊາດ, ເຂົ້າຮ່ວມມີບັນດາທ່ານຮອງປະທານກຳມາທິການ, ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ, ຫົວໜ້າ-ຮອງຫົວໜ້າກົມ, ຄະນະພະແນກ ແລະພະນັກງານທີ່ກ່ຽວຂ້ອງພາຍໃນສະພາແຫ່ງຊາດ; ທັງນີ້, ເພື່ອຜັນຂະຫຍາຍແຜນດຳເນີນງານຂອງຄະນະປະຈຳສະພາແຫ່ງຊາດ.

ກອງປະຊຸມຄັ້ງນີ້ ໄດ້ຄົ້ນຄວ້າ, ປະກອບຄຳເຫັນແລກປ່ຽນກັນຢ່າງກົງໄປກົງມາ ກ້າວໄປສູ່ຄວາມເປັນເອກະພາບດ້ານເນື້ອໃນຂອງບັນດານິຕິກຳດັ່ງກ່າວໃນການນຳສະເໜີຄະນະປະຈຳສະພາແຫ່ງຊາດ ລົງລາຍເຊັນໃນເວລາອັນຄວນ ເພື່ອຈະເປັນບ່ອນອີງທີ່ສຳຄັນໃນການຈັດຕັ້ງປະຕິບັດຂອງແຕ່ລະພາກສ່ວນຢ່າງຄ່ອງຕົວ ແລະ ກົມກຽວກັນ ແນໃສ່ເຮັດໃຫ້ວຽກງານແຕ່ລະຂົງເຂດ ມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນ. ກອງປະຊຸມໄດ້ຮັບຟັງບົດຮຽນການສ້າງຄວາມເຂັ້ມແຂງ ແລະ ຍົກສູງບົດບາດວຽກງານຫ້ອງວ່າການ ເປັນຕົ້ນ: ບົດຮຽນ ແລະ ການປະຕິບັດວຽກງານທີ່ດີຂອງປະເທດຟີລິບປິນ, ຮ່າງມະຕິຂອງຄະນະປະຈຳສະພາແຫ່ງຊາດວ່າດ້ວຍລະບຽບການດຳເນີນກອງປະຊຸມຄະນະປະທານຄະນະປະຈຳສະພາແຫ່ງຊາດ ແລະ ກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ຮ່າງມະຕິຂອງຄະນະປະຈຳສະພາແຫ່ງຊາດວ່າດ້ວຍການປະສານງານລະຫວ່າງຫ້ອງວ່າການສະພາແຫ່ງຊາດ ກັບ ບັນດາກຳມາທິການພາຍໃນສະພາແຫ່ງຊາດ, ຮ່າງມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງວ່າການສະພາແຫ່ງຊາດ, ແລະຮ່າງມະຕິຂອງຄະນະປະຈຳສະພາແຫ່ງຊາດວ່າດ້ວຍວຽກງານບໍລິການຈໍລະຈອນເອກະສານຜ່ານປະຕູດຽວ; ຈາກນັ້ນ, ໄດ້ພ້ອມກັນເຊີດຊູຄວາມຮັບຜິດຊອບ, ສຸມສະຕິປັນຍາ ແລະ ປະສົບການໃນການຖ່າຍທອດບົດຮຽນອັນລ້ຳຄ່າ ເພື່ອຄົ້ນຄວ້າ, ປະກອບຄຳເຫັນໃສ່ແຕ່ລະເນື້ອໃນຂອງນິຕິກຳຢ່າງມີຈຸດສຸມ ເຊິ່ງເປັນຂໍ້ມູນສຳຄັນໃຫ້ແກ່ຄະນະຮັບຜິດຊອບ ໄດ້ນຳໄປຄົ້ນຄວ້າ, ວິເຄາະວິໄຈ ແລະ ປັບປຸງເຂົ້າໃສ່ຮ່າງນິຕິກຳແຕ່ລະສະບັບ ສາມາດເຮັດໃຫ້ບັນດານິຕິກຳດັ່ງກ່າວ ມີເນື້ອໃນຊັດເຈນ, ຄົບຖ້ວນ, ຮັດກຸມ ແລະສາມາດຈັດຕັ້ງປະຕິບັດໄດ້ດ້ວຍຄຸນນະພາບສູງ.

ທ່ານ ສົງຄຳ ວົງພະຈັນ ກ່າວວ່າ: ບັນດານິຕິກຳທີ່ນຳມາຄົ້ນຄວ້າໃນຄັ້ງນີ້ ມີຄວາມສຳຄັນຫຼາຍ ເນື່ອງຈາກຕິດພັນກັບການປະຕິບັດໜ້າທີ່ວຽກງານ ທັງແນໃສ່ຍົກສູງຄຸນນະພາບຂອງແຕ່ລະຂົງເຂດ ເພື່ອປະກອບສ່ວນເຮັດໃຫ້ສະພາແຫ່ງຊາດ ສາມາດປະຕິບັດໜ້າຂອງຕົນໄດ້ຢ່າງມີປະສິດທິພາບ ແລະປະສິດທິຜົນໃນໄລຍະໃໝ່.

# ມອບ-ຮັບໃບຍ້ອງຍໍໃຫ້ຜູ້ທີ່ຊ່ວຍປັບປຸງຫ້ອງມູນເຊື້ອ



(ສພຊ) - ວັນທີ 11 ມີນານີ້ ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີພິທີມອບ-ຮັບໃບຍ້ອງຍໍໃຫ້ແກ່ພະນັກງານ-ລັດຖະກອນ ທີ່ຊ່ວຍວຽກປັບປຸງຫ້ອງມູນເຊື້ອສະພາແຫ່ງຊາດ ໂດຍຕາງໜ້າມອບຂອງທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າກົມສື່ມວນຊົນ ເຊິ່ງມີຄະນະພະແນກ ແລະລັດຖະກອນວິຊາການເຂົ້າເປັນສັກຂີພະຍານ .

ອີງຕາມຂໍ້ຕົກລົງຂອງຫ້ອງວ່າການສູນກາງພັກ ສະບັບເລກທີ 193/ຫສພ,, ລົງວັນທີ 8 ເມສາ 2024 ວ່າດ້ວຍການແຕ່ງຕັ້ງພະນັກງານ-ລັດຖະກອນຊ່ວຍວຽກຫ້ອງມູນເຊື້ອຂອງສະພາແຫ່ງຊາດແລະໜັງສືຄຳເຫັນຂອງຫ້ອງການສູນກາງແນວລາວສ້າງຊາດ ສະບັບລົງວັນທີ 29 ສິງຫາ 2024 ເຊິ່ງມີລາຍຊື່ຜູ້ທີ່ໄດ້ປະກອບສ່ວນໃນການປັບປຸງຫ້ອງມູນເຊື້ອ 7 ທ່ານ, ຍິງ 2 ທ່ານ ດັ່ງນີ້: ທ່ານ ທອງວັນ ທອງດີ ອະດີດຮອງຫົວໜ້າກົມພິພິທະພັນ ໄກສອນ ພົມວິຫານ ແລະອະນຸສອນສະຖານຜູ້ນຳປະຕິວັດ; ທ່ານ ວິໄລທອງ ແກ້ວມະນີວົງ ຫົວໜ້າພະແນກອະນຸສອນສະຖານປະທານ ສຸພານຸວົງ; ທ່ານ ພູຜາ ທົງສີວິໄລ ຮອງຫົວໜ້າພະແນກຫໍພິພິທະພັນ ໄກສອນ ພົມວິຫານ; ທ່ານ ຈິດຕະພົງ ໂພທິລັກ ຫົວໜ້າພະແນກວິທະຍຸ-ໂທລະພາບ, ກົມໂຄສະນາຂອງສູນກາງແນວລາວສ້າງຊາດ; ທ່ານ ນາງ ພວງສະບາ ຊຸມສີງຮອງຫົວໜ້າພະແນກອະນຸສອນສະຖານປະທານ ສຸພານຸວົງ; ທ່ານ ອາລິຍາ ຈັນດາໂສ ລັດຖະກອນວິຊາການພະແນກສົ່ງເສີມວິຊາສະເພາະ, ຫໍພິພິທະພັນ ໄກສອນ ພົມວິຫານ ແລະ ທ່ານ ນາງ ວັນນາ ແກ້ວອຸດົມ ລັດຖະກອນວິຊາການພະແນກໂຄສະນາ ແລະ ຫໍມູນເຊື້ອສູນກາງແນວລາວສ້າງຊາດ.

ໃນພິທີ, ທ່ານຮອງຫົວໜ້າກົມສື່ມວນຊົນ ໄດ້ກ່າວສະແດງຄວາມຂອບໃຈບັນດາທ່ານທີ່ໄດ້ປະກອບສ່ວນຊ່ວຍວຽກປັບປຸງຫ້ອງມູນເຊື້ອສະພາແຫ່ງຊາດໃນໄລຍະຜ່ານມາ ເຮັດໃຫ້ສາມາດເປີດວາງສະແດງທັນຕາມກຳນົດ ແລະ ແຜນການທີ່ວາງໄວ້ ແລະຫວັງຢ່າງຍິ່ງວ່າຈະໄດ້ຮ່ວມວຽກຮ່ວມງານນຳບັນດາທ່ານໃນການປັບປຸງຫ້ອງມູນເຊື້ອໃນຄັ້ງຕໍ່ໄປ. ຫຼັງຈາກນັ້ນ, ຍັງໄດ້ພ້ອມກັນຢ້ຽມຊົມສະຖານທີ່ຕົວຈິງ ແລະ ມອບປຶ້ມທີ່ລະນຶກຈາກ ສພຊ ເພື່ອເປັນທີ່ລະນຶກອີກດ້ວຍ.

**(ນາງ ນິດຕາ ຄຸນປາກດີ)**



## ທູດທີ່ຈະໄປ...

(ຕໍ່ຈາກໜ້າ 1)

ວິສາມັນຜູ້ມີອຳນາດເຕັມ ແຫ່ງ ສປປລາວ ທີ່ຖືກແຕ່ງຕັ້ງໄປປະຈຳສະຫະລາຊະອານາຈັກອັງກິດ ແລະ ທ່ານ ສອນໄຊ ວັນນະໄຊ ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມແຫ່ງສປປລາວ ທີ່ຖືກແຕ່ງຕັ້ງໄປປະຈຳລາຊະອານາຈັກກຳປູເຈຍ.

ໂອກາດນີ້, ທ່ານ ສັນຍາ ປຣະເສີດ ໄດ້ເນັ້ນໜັກຕໍ່ວຽກງານການຕ່າງປະເທດ ແລະ ພາລະບົດບາດຂອງສະພາແຫ່ງຊາດ ພ້ອມທັງແຈ້ງຜົນສຳເລັດຂອງການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ເຊິ່ງປັດຈຸບັນ, ພວມກະກຽມກອງປະຊຸມຄັ້ງປະຖົມມະລຶກຂອງ ສພຊ ຊຸດທີ X ທີ່ຈະຈັດຂຶ້ນໃນທ້າຍເດືອນມີນານີ້ ໂດຍກອງປະຊຸມຈະມີການຮັບຮອງເອົາໂຄງປະກອບ ແລະ ບຸກຄະລາກອນທີ່ເປັນການນຳຂັ້ນສູງຂອງອົງການຈັດຕັ້ງຂອງລັດຊຸດໃໝ່; ນອກຈາກນີ້, ຍັງຈະພິຈາລະນາຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີX(2026-2030), ແຜນການ 5 ປີ ຂອງສະພາແຫ່ງຊາດ, ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ. ປະທານ ກຕທ ໄດ້ຝາກໃຫ້ເອກອັກຄະລັດຖະທູດທັງສອງສືບຕໍ່ເສີມຂະຫຍາຍການພົວພັນຮ່ວມມືກັບລັດຖະບານ ແລະ ລັດຖະສະພາ ເພື່ອສືບຕໍ່ການພົວພັນຮ່ວມມືທາງດ້ານເສດຖະກິດ, ການຄ້າ ແລະ ການລົງທຶນ ແລະ ໃຫ້ຊ່ວຍເຫຼືອປະເທດເຮົາ ໂດຍສະເພາະການສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາແຫ່ງຊາດ (ສສຊ)ຊຸດໃໝ່, ສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ບົດບາດຍິງ-ຊາຍ, ວຽກງານສິດທິມະນຸດ; ພ້ອມນີ້, ຍັງໄດ້ມອບໝາຍໃຫ້ເອກອັກຄະລັດຖະທູດລາວປະຈຳອັງກິດ ສືບຕໍ່ຂົນຂວາຍສ້າງເງື່ອນໄຂໃຫ້ ສສຊ ໄດ້ໄປແລກປ່ຽນບົດຮຽນ ໂດຍສະເພາະການຄຸ້ມຄອງບໍລິຫານແລະການຕິດຕາມກວດກາຂອງລັດຖະສະພາອັງກິດ.

ທ່ານ ໄມບົວ ໄຊຍະວົງ ແລະ ທ່ານ ສອນໄຊ ວັນນະໄຊ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບ ແລະ ໄດ້ມີການຊຸກຍູ້, ໃຫ້ການສະໜັບສະໜູນ ແລະ ມີຄວາມເປັນຫ່ວງເປັນໄຍ ຕໍ່ວຽກງານການຕ່າງປະເທດ ໂດຍຈະນຳເອົາທິດຊີ້ນຳດັ່ງກ່າວ ໄປຈັດຕັ້ງຜັນຂະຫຍາຍເຂົ້າໃນວຽກງານຕົວຈິງໃຫ້ເກີດຜົນດີຂຶ້ນ.




## ສະຫະພັນ...

(ຕໍ່ຈາກໜ້າ 1)

ເງິນ ແລະ ການກວດສອບ, ປະທານສະຫະພັນແມ່ຍິງສະພາແຫ່ງຊາດ ໄດ້ເຄື່ອນໄຫວທັດສະນະສຶກສາຢູ່ຫ້ອງການປົກຄອງເມືອງນາຊາຍທອງ ໂດຍການຕ້ອນຮັບອັນອົບອຸ່ນຂອງທ່ານ ສຸລິວັນ ພົມມະຫາໄຊ ເລຂາພັກເມືອງນາຊາຍທອງ ແລະ ທ່ານ ນາງ ຕຽນທອງ ສຸລິວົງ ກຳມະການພັກເມືອງ, ຄະນະບໍລິຫານງານສະຫະພັນແມ່ຍິງນະຄອນຫຼວງວຽງຈັນ, ປະທານສະຫະພັນແມ່ຍິງເມືອງນາຊາຍທອງ, ມີບັນດາຄະນະປະຈຳ ແລະ ກຳມະການພັກເມືອງ, ຄະນະບໍລິຫານງານສະຫະພັນແມ່ຍິງເມືອງນາຊາຍທອງ, ປະທານສະຫະພັນແມ່ຍິງຮາກຖານອ້ອມຂ້າງ, ປະທານສະຫະພັນແມ່ຍິງຮາກຖານໂຮງຮຽນ ແລະ ປະທານສະຫະພັນແມ່ຍິງຮາກຖານບ້ານທົ່ວເມືອງນາຊາຍທອງ ເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງການເຄື່ອນໄຫວທັດສະນະສຶກສາ, ພົບປະຢ້ຽມຢາມ ແລະ ແລກປ່ຽນບົດຮຽນຄັ້ງນີ້ ແມ່ນການເຕົ້າໂຮມຄວາມສາມັກຄີລະຫວ່າງສະຫະພັນແມ່ຍິງສະພາແຫ່ງຊາດ ກັບສະຫະພັນແມ່ຍິງເມືອງນາຊາຍທອງ ເຊິ່ງເປັນບາດກ້າວໜຶ່ງທີ່ສຳຄັນໃນການສົ່ງເສີມ, ພັດທະນາວຽກງານຂອງສະຫະພັນແມ່ຍິງ ທັງເປັນໂອກາດອັນດີທີ່ໄດ້ພົບປະແລກປ່ຽນປະສົບການອັນຈະນຳໄປສູ່ການຮ່ວມມື ແລະ ພັດທະນາຮ່ວມກັນໃນອະນາຄົດ; ການທັດສະນະສຶກສາໃນຄັ້ງນີ້ ໄດ້ເປີດກອງປະຊຸມເພື່ອຮັບຟັງການລາຍງານໂດຍຫຍໍ້ການເຄື່ອນໄຫວວຽກງານຂອງສະຫະພັນແມ່ຍິງເມືອງນາຊາຍທອງ ແລະ ຂອງສະຫະພັນແມ່ຍິງ ສພຊ, ພ້ອມກັນນີ້ຜູ້ເຂົ້າຮ່ວມກໍໄດ້ປະກອບຄຳຄິດຄຳເຫັນ ແລະ ປ່ຽນບົດຮຽນເຊິ່ງກັນແລະກັນຢ່າງກົງໄປກົງມາ.

ພາຍຫຼັງສຳເລັດກອງປະຊຸມ, ຍັງໄດ້ທ່ຽວຊົມສວນບັນດາເຜົ່າເມືອງນາຊາຍທອງອີກດ້ວຍ.

**(ນາງ ໄຊໂສພາພອນ ມີ່ງມຸງຄຸນ)**



## ຄະນະ...

(ຕໍ່ຈາກໜ້າ 1)

(ສພຊ) - ເມື່ອບໍ່ດົນມານີ້, ໂດຍຕອບສະໜອງຕາມການເຊີນຂອງສະມາຄົມມິດຕະພາບມຽນມາ-ລາວ, ຄະນະຜູ້ແທນສະມາຄົມມິດຕະພາບ ລາວ-ມຽນມາ ນຳໂດຍທ່ານ ຈັນທະວົງ ແສນອາມາດມົນຕີ ຮອງປະທານກຳມາທິການການຕ່າງປະເທດຂອງສະພາແຫ່ງຊາດ, ປະທານສະມາຄົມມິດຕະພາບ ລາວ-ມຽນມາ ໄດ້ເດີນທາງໄປຢ້ຽມຢາມ ແລະ ເຮັດວຽກຢູ່ນະຄອນຫຼວງເນປີດໍ, ສສ.ມຽນມາ.

ໃນໂອກາດນີ້, ສອງສະມາຄົມມິດຕະພາບ ໄດ້ຈັດກອງປະຊຸມພົບປະສອງຝ່າຍພາຍໃຕ້ການເປັນປະທານຮ່ວມຂອງທ່ານ ຈັນທະວົງ ແສນອາມາດມົນຕີ ແລະ ທ່ານ ພົຈວ. ວິນ ມອງ (Win Maung) ປະທານສະມາຄົມມິດຕະພາບ ມຽນມາ-ລາວ ໂດຍມີເອກອັກຄະລັດຖະທູດລາວປະຈຳມຽນມາ, ຄະນະຜູ້ແທນສະມາຄົມມິດຕະພາບ ລາວ-ມຽນມາ, ມຽນມາ-ລາວ ແລະ ພາກສ່ວນກ່ຽວຂ້ອງຂອງສອງຝ່າຍ ເຂົ້າຮ່ວມ ເຊິ່ງກອງປະຊຸມໄດ້ສະຫຼຸບຕີລາຄາຜົນການພົວພັນຮ່ວມມືໃນໄລຍະປີ2025 ແລະ ວາງທິດທາງແຜນການປະຈຳປີ2026 ຂອງສອງສະມາຄົມ ເພື່ອເຄື່ອນໄຫວຮ່ວມກັນຕາມພາລະບົດບາດ ແລະ ເຜີຍແຜ່ໃຫ້ປະຊາຊົນສອງຊາດ ໄດ້ຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງ, ສະໜັບສະໜູນໃຫ້ມີການໄປມາຫາສູ່, ພົວພັນຮ່ວມມື, ສ້າງຄວາມຮັກແພງ, ຄວາມໄວ້ເນື້ອເຊື່ອໃຈ ແລະ ສ້າງກິດຈະກຳຮ່ວມກັນເພື່ອປະກອບສ່ວນເຂົ້າໃນການເສີມຂະຫຍາຍ ແລະ ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມລະຫວ່າງສປປລາວແລະ ສສ.ມຽນມາ ໃຫ້ນັບມື້ໄດ້ຮັບການພັດທະນາ ແລະ ກ້າວເຂົ້າສູ່ລະດັບໃໝ່; ພ້ອມນີ້, ສະມາຄົມມິດຕະພາບລາວ-ມຽນມາ-ລາວ ໄດ້ຮ່ວມກັນເຊັນບົດບັນທຶກຄວາມເຂົ້າໃຈ (MOU) ການພົວພັນການຮ່ວມມືໄລຍະ 5 ປີ (2026-2030) ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດການພົວພັນຮ່ວມມື 2 ຝ່າຍໃນຕໍ່ໜ້າ.

ໃນໂອກາດຢ້ຽມຢາມ ແລະເຂົ້າຮ່ວມກອງປະຊຸມຄັ້ງນີ້, ຄະນະຜູ້ແທນສະມາຄົມມິດຕະພາບລາວ-ມຽນມາຍັງໄດ້ຢ້ຽມຂໍ່ານັບທ່ານ ອູ ທັນ ສະເວ (U Than Swe) ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຕ່າງປະເທດ ສສ.ມຽນມາ ໂດຍທ່ານໄດ້ຕີລາຄາສູງຕໍ່ການຢ້ຽມຢາມຂອງຄະນະຜູ້ແທນສະມາຄົມມິດຕະພາບ ລາວ-ມຽນມາ ໃນຄັ້ງນີ້ ແລະ ຕີລາຄາສູງຕໍ່ສາຍພົວພັນ ແລະ ການຮ່ວມມືອັນດີງາມລະຫວ່າງສອງປະເທດ ແລະ ປະຊາຊົນສອງຊາດ ອັນເປັນການເປີດກວ້າງການພົວພັນຮ່ວມມື, ຊຸກຍູ້ການພົວພັນການທູດປະຊາຊົນ ທັງເປັນການເສີມຂະຫຍາຍ, ຮັດແໜ້ນສາຍພົວພັນມິດຕະພາບ, ການຮ່ວມມື ແລະ ສ້າງຄວາມເຂົ້າອົກເຂົ້າໃຈລະຫວ່າງປະຊາຊົນສອງຊາດ ໂດຍສະເພາະສອງສະມາຄົມມິດຕະພາບ ໃຫ້ມີບາດກ້າວໃໝ່; ນອກນັ້ນ, ຍັງໄດ້ແຈ້ງສະພາບການພັດທະນາອັນພົ້ນເດັ່ນຂອງ ສສ.ມຽນມາ ໃຫ້ຄະນະຜູ້ແທນຊາບ. ທ່ານ ຈັນທະວົງ ແສນອາມາດມົນຕີ ກໍໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນ ແລະ ການອຳນວຍຄວາມສະດວກໃຫ້ແກ່ຄະນະຜູ້ແທນສະມາຄົມມິດຕະພາບ ລາວ-ມຽນມາ, ທັງໄດ້ລາຍງານການເຄື່ອນໄຫວອັນພົ້ນເດັ່ນຂອງສະມາຄົມມິດຕະພາບລາວ-ມຽນມາແລະຍິນດີສືບຕໍ່ຮ່ວມກັບສະມາຄົມມິດຕະພາບ ມຽນມາ-ລາວ ເພື່ອເສີມຂະຫຍາຍສາຍພົວພັນມິດຕະພາບໃຫ້ນັບມື້ນັບດີຂຶ້ນ.

ນອກຈາກນີ້, ຄະນະຜູ້ແທນສະມາຄົມມິດຕະພາບລາວ-ມຽນມາ ຍັງໄດ້ຢ້ຽມຢາມສະຖານທີ່ທ່ອງທ່ຽວທາງປະຫວັດສາດ ແລະ ວັດທະນະທຳ ຈຳນວນໜຶ່ງ ຢູ່ນະຄອນຢ່າງກຸ້ງ ແລະ ນະຄອນຫຼວງເນປີດໍ ອີກດ້ວຍ.

**(ຄະນະພົວພັນຕ່າງປະເທດ ສູນກາງພັກ)**



## ສັງລວມ...

(ຕໍ່ຈາກໜ້າ 1)

ຢູ່ສປປລາວພ້ອມທັງປຶກສາຫາລືຮ່າງແຜນການດຳເນີນການປະເມີນຜົນການຈັດຕັ້ງປະຕິບັດດຳລັດດັ່ງກ່າວ ໂດຍການເປັນປະທານຂອງທ່ານ ແກ້ວຈະເລີນ ເຊ່ຍຢົ້ງຢ່າງ ຮອງປະທານກຳມາທິການບັນດາເຜົ່າ; ເຂົ້າຮ່ວມມີບັນດາຕາງໜ້າຈາກກຳມາທິການວັດທະນະທຳ-ສັງຄົມ, ສູນກາງແນວລາວສ້າງຊາດ, ກົມ 201 ກະຊວງປ້ອງກັນຄວາມສະຫງົບ ແລະ ພະນັກງານທີ່ກ່ຽວຂ້ອງ.

ກອງປະຊຸມໄດ້ຮັບຟັງລາຍງານຜົນການຕິດຕາມກວດກາການຈັດຕັ້ງປະຕິບັດດຳລັດວ່າດ້ວຍການຄຸ້ມຄອງ ແລະປົກປ້ອງການເຄື່ອນໄຫວສາສະໜາຢູ່ ສປປລາວ, ການຕີລາຄາການຈັດຕັ້ງປະຕິບັດດຳລັດແລະຮ່າງແຜນການດຳເນີນການປະເມີນຜົນການຈັດຕັ້ງປະຕິບັດດຳລັດດັ່ງກ່າວ; ຈາກນັ້ນ, ໄດ້ພ້ອມກັນຍົກສູງຄວາມເປັນເຈົ້າການໃນການປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາພ້ອມທັງປຶກສາຫາລື, ຖອດຖອນແລກປ່ຽນບົດຮຽນເຊິ່ງກັນແລະກັນ ເຮັດໃຫ້ກອງປະຊຸມໄດ້ຮັບຜົນສຳເລັດຢ່າງຈົບງາມ.

# ສະພາປະຊາຊົນແຂວງວຽງຈັນ ຕ້ອນຮັບຄະນະຜູ້ແທນແຂວງກີຢອງຊັງນຳ ສ.ເກົາຫຼີ



(ສພຂ) - ເພື່ອແລກປ່ຽນບົດຮຽນ ແລະ ຊຸກຍູ້ການຮ່ວມມືໃນດ້ານຕ່າງໆ ວັນທີ 5 ມີນານີ້ ທີ່ຫ້ອງວ່າການແຂວງວຽງຈັນ, ທ່ານ ບຸນສອນເຜີດລາວັນປະທານສະພາປະຊາຊົນແຂວງ(ສພຂ) ວຽງຈັນ ພ້ອມດ້ວຍຄະນະ ໄດ້ຕ້ອນຮັບການມາຢ້ຽມຢາມຂອງຄະນະຜູ້ແທນ ຈາກແຂວງກີຢອງຊັງນຳ ສາທາລະນະລັດເກົາຫຼີ ນຳໂດຍ ທ່ານ ປາກ ຊອງອູ ຫົວໜ້າສະຫວັດດີການ ແຂວງກີຢອງຊັງນຳ ພ້ອມຄະນະ.

ທ່ານ ບຸນສອນ ເຜີດລາວັນ ໄດ້ລາຍງານໂດຍສັງເຂບກ່ຽວກັບສະພາບການພັດທະນາເສດຖະກິດ-ສັງຄົມຂອງແຂວງວຽງຈັນ; ຈາກນັ້ນ, ສອງຝ່າຍໄດ້ຕີລາຄາຕໍ່ສາຍພົວພັນຖານມິດສະຫາຍ, ການຊ່ວຍເຫຼືອຈາກຝ່າຍ ສ.ເກົາຫຼີ ແລະ ປຶກສາຫາລືກ່ຽວກັບການກຳນົດຂອບເຂດການຮ່ວມມືໃນຕໍ່ໜ້າ ໂດຍເນັ້ນໃສ່ການຝຶກອົບຮົມບຸກຄະລາກອນທາງການແພດ, ເຕັກນິກການກະເສດ ແລະ ວຽກງານດັບເພີງ ທັງນີ້ ກໍເພື່ອຜັນຂະຫຍາຍເນື້ອໃນຂອງໜັງສືສະເໜີຮ່ວມມືເພື່ອການພັດທະນາ (ODA) ທີ່ໄດ້ມີການຫາລືກັນໃນເດືອນກໍລະກົດ 2025 ໃຫ້ເກີດເປັນຮູບປະທຳ.

ສປປ ລາວ ກໍຄືແຂວງວຽງຈັນ ໄດ້ຮັບການຊ່ວຍເຫຼືອນັບແຕ່ປີ 2022 ເປັນຕົ້ນມາ ຜ່ານມາມູນນິທິ ໂຣຕາຣີ ແລະ ມູນນິທິ ໂກບອນໄລແຊຣິງ ຈາກ ສ.ເກົາຫຼີ ໄດ້ໃຫ້ການຊ່ວຍເຫຼືອລ້າດ້ານສາທາລະນະສຸກຢ່າງຫຼວງຫຼາຍ ເຊັ່ນ: ການສ້ອມແປງໂຮງຮຽນອະນຸບານ ແລະ ຫໍພັກຄູ ມູນຄ່າ 187 ລ້ານກີບ, ການສະໜອງຢາປິ່ນປົວພະຍາດໃຫ້ແກ່ໂຮງໝໍແຂວງ ແລະ ສຸກສາລາ 50 ແຫ່ງ ລວມມູນຄ່າ 19.9 ຕື້ກວ່າກີບ, ລົດອຳບູລັງ (ລົດກູ້ໄພ) ຈຳນວນ 10 ຄັນ ມູນຄ່າ 2 ແສນໂດລາ ເພື່ອຍົກລະດັບການບໍລິການການແພດສຸກເສີນ.

ພ້ອມນັ້ນ, ຄະນະຜູ້ແທນຍັງໄດ້ຢ້ຽມຢາມ ໂຮງຮຽນສາທາລະນະສຸກແຂວງວຽງຈັນ ແລະ ມອບທຶນຊ່ວຍເຫຼືອການຮຽນໃຫ້ແກ່ນັກສຶກສາຜູ້ທີ່ມີຄວາມທຸກຍາກ ແລະ ອຸປະກອນເຂົ້າໃນການຮຽນການສອນ ເປັນຕົ້ນຫຸ່ນ CPR ເດັກ 2 ໂຕ ແລະ ຫຸ່ນ CPR ເປົ່າພົມ 14 ອັນ.

**(ບຸລາຕີ ແສນທະວົງ)**

# ຖອດຖອນບົດຮຽນການເລືອກຕັ້ງ ສສຊ, ສສຂ




(ສພຂ) - ກອງປະຊຸມສະຫຼຸບຖອດຖອນບົດຮຽນການເລືອກຕັ້ງສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ X ແລະ ສສຂ ຊຸດທີ V ຢູ່ແຂວງບໍລິຄຳໄຊ ໄດ້ຈັດຂຶ້ນທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໃນວັນທີ 11 ມີນານີ້, ພາຍໃຕ້ການເປັນປະທານຮ່ວມຂອງທ່ານ ປອ. ສອນທະນູທຳມະວົງກຳມະການສູນກາງພັກ, ເລຂາຄະນະບໍລິຫານພັກແຂວງ, ປະທານຄະນະກຳມະການເລືອກຕັ້ງຂັ້ນແຂວງ ແລະ ທ່ານ ປອ. ສຸວັນນີ ໄຊຊະນະ ປະທານສະພາປະຊາຊົນແຂວງ; ມີຄະນະກຳມະການເລືອກຕັ້ງຂັ້ນແຂວງ-ຂັ້ນເມືອງ, ຫົວໜ້າອານຸກຳມະການ ແລະ ຜູ້ຮັບລົງສະໝັກເລືອກຕັ້ງ ສສຊ, ສສຂ ເຂົ້າຮ່ວມ.

ທ່ານ ນາງ ຂັນທອງ ພັນທະຈັກ ຕາງໜ້າໃຫ້ຄະນະກຳມະການເລືອກຕັ້ງຂັ້ນແຂວງ ໄດ້ລາຍງານຮ່າງບົດສະຫຼຸບຜົນສຳເລັດການກະກຽມ ແລະ ດຳເນີນການປ່ອນບັດເລືອກຕັ້ງ ສສຊ ຊຸດທີ X ແລະ ສພຂ ຊຸດທີ V ຢູ່ແຂວງບໍລິຄຳໄຊ ເຊິ່ງຍົກໃຫ້ເຫັນຜົນສຳເລັດ, ຂໍ້ຄົງຄ້າງ ແລະ ບົດຮຽນທີ່ສາມາດຖອດຖອນໄດ້ ໂດຍສະເພາະການປະຕິບັດບັນດານິຕິກຳຂອງຂັ້ນເທິງ ເຊິ່ງໄດ້ຄົ້ນຄວ້າ, ພິຈາລະນາ ແລະ ອອກຂໍ້ຕົກລົງ ຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງໃນນັ້ນ, ມີຈຳນວນຜູ້ລົງຮັບສະໝັກ ສສຊ 10 ທ່ານ, ຍິງ 2 ທ່ານ, ເທົ່າ

ອ່ານຕໍ່ໜ້າ 12

# ລາຍຊື່ຜູ້ໄດ້ຮັບເລືອກຕັ້ງເປັນ ສສຂ ວຽງຈັນ



(ສພຂ) - ວັນທີ 2 ມີນານີ້, ທ່ານ ບຸນສອນ ເຜີດລາວັນ ປະທານສະພາປະຊາຊົນແຂວງ, ຮອງປະທານຄະນະກຳມະການເລືອກຕັ້ງແຂວງວຽງຈັນ ຕາງໜ້າໃຫ້ຄະນະກຳມະການເລືອກຕັ້ງແຂວງວຽງຈັນ ປະກາດລາຍຊື່ຜູ້ສະໝັກໄດ້ຮັບເລືອກຕັ້ງເປັນສະມາຊິກສະພາປະຊາຊົນແຂວງວຽງຈັນ ຊຸດທີ V ເຊິ່ງມີຈຳນວນ 55 ທ່ານ, ຍິງ 12 ທ່ານ ມີດັ່ງນີ້:

**1. ເຂດເລືອກຕັ້ງເມືອງວຽງຄຳ ມີ 05 ທ່ານ, ຍິງ 1 ທ່ານ ຄື:**

1) ທ່ານ ສົມໝາຍ ໄຊຍະວົງ

2) ທ່ານ ພູວົງ ສຸພັນທອນ

3) ທ່ານ ນາງ ເຜີດສະໝອນ ສຸທຳມະວົງ

4) ທ່ານ ສາຍໃຈ ພົງສະນິດ

5) ທ່ານພັທ. ສາຍຟອງ ແກ້ວປະເສີດ.

**2. ເຂດເລືອກຕັ້ງເມືອງທຸລະຄົມ ມີ 05 ທ່ານ, ຍິງ 0 ທ່ານ ຄື:**

1) ທ່ານ ຄຳເລ້ ໄຊຍະວົງສີ

2) ທ່ານ ທອງສູນ ຊາມູນຕຣີ

3) ທ່ານ ພູເງິນ ສີຫາປັນຍາ

4) ທ່ານ ພັທ. ບູນລົມ ໄຊຍະລາດ

5) ທ່ານ ຄຳສອນ ກຸນນະວົງ.

**3. ເລືອກຕັ້ງເມືອງແກ້ວອຸດົມ ມີ 05 ທ່ານ, ຍິງ 01 ທ່ານ ຄື:**

1) ທ່ານ ວິລະວຸດ ປະກິດ

2) ທ່ານ ນາງ ຫວານໃຈ ສຸດທິເດດ

3) ທ່ານ ອຸທິດ ບຸດສະບາ

4) ທ່ານ ດວງປັນຍາ ເຜືອມະນີວົງ.

**4. ເລືອກຕັ້ງເມືອງໂພນໂຮງ ມີ 05 ທ່ານ, ຍິງ 02 ທ່ານ ຄື:**

1) ທ່ານ ສັນຕິພາບ ນິລະເກດ

2) ທ່ານ ແສງເພັດ ພົດສະລາດ

3) ທ່ານ ນາງ ທິດສະໄໝ ວົງສະຫວາດ

4) ທ່ານ ພັທ ສົມລິດ ໂສດາວົງ

6) ທ່ານ ນາງ ແຫວນວົງ ແສງຈັນທະວົງ.

**5. ເຂດເລືອກຕັ້ງເມືອງແມດ ມີ 05 ທ່ານ, ຍິງ 01 ທ່ານ ຄື:**

1) ທ່ານ ອ່ອນຕາ ທຳມະວົງສາ

2) ທ່ານ ໜູຮັກ ຫຼວງໂຄດ

3)ທ່ານດຣແສງເດືອນ ສີແສງຈັນ

4) ທ່ານ ໄມເສົາ ພົມມະຈັກ

5) ທ່ານ ນາງ ໜູພິນ ຄຳຕາ

**6. ເຂດເລືອກຕັ້ງເມືອງກາສີ ມີ 05 ທ່ານ. ຍິງ 01 ທ່ານ ຄື:**

1) ທ່ານ ອຳໄພ ໂສລັດຕະນະວົງ

2) ທ່ານ ຄຳຫຼ້າ ແກ້ວພົມມາ

3) ທ່ານ ນາງ ວັນມະນີ ໄຊຍະສົມບູນ

4) ທ່ານ ກົງໃຈ ສໍພາບມີໄຊ

5) ທ່ານ ພັທ ສຸລິຍາ ດວງມາລາ

**7. ເຂດເລືອກຕັ້ງເມືອງວັງວຽງ ມີ 05 ທ່ານ, ຍິງ 01 ທ່ານ ຄື:**

1) ທ່ານ ຄຳປ່ຽນ ແສງສະຫວັດ

2) ທ່ານ ຄຳພັນ ຊະນະໄພ

3) ທ່ານ ບຸນປະເສີດ ຈັນທະລັງສີ

4) ທ່ານ ອຸດາລອນ ໄຫຼໄຊຊະນະ

5) ທ່ານ ນາງ ພອນໄຊ ຫຼວງວິລາດ.

**8. ເຂດເລືອກຕັ້ງເມືອງຫີນເຫີບ ມີ 05 ທ່ານ, ຍິງ 01 ທ່ານ ຄື:**

1) ທ່ານ ກົງຈັນ ພັນທະມິດ

2) ທ່ານ ຄຳແສນ ວິໄລ

3) ທ່ານ ສໍລະພົງ ລາດຊະວົງ

4) ທ່ານ ບຸນປອນ ຈະເລີນສຸກ

5) ທ່ານ ນາງ ພູວັນ ເມືອງມັນໂທ.

**9. ເຂດເລືອກຕັ້ງເມືອງເຟືອງ ມີ 05 ທ່ານ, ຍິງ 01 ທ່ານ ຄື:**

1) ທ່ານ ຄຳປ່ຽນ ຈັນທະມັງຄຸນ

2) ທ່ານ ບຸນມີ ກາຢົງ

3) ທ່ານ ສາຍສະໝອນ ວໍຣະຈິດ

4) ທ່ານ ນາງ ສົມຄິດ ຈິດດາວົງ

5) ທ່ານ ພັທ ບຸນໄທ ໄຊຍະລາດ.

**10. ເຂດເລືອກຕັ້ງເມືອງໝື່ນ ມີ 05 ທ່ານ, ຍິງ 01 ທ່ານ ຄື:**

1) ທ່ານ ວໍລະສອນ ສີອັກຄະສອນ

2) ທ່ານ ນາງ ວອນ ປາໄຊ

3) ທ່ານ ພັທ ສອນເພັດ ກາສີອຸດົມ

4) ທ່ານ ຢ່າງ ລໍ່

5) ທ່ານ ບຸນປອນ ຍິ່ງພົມມະຈັນ.

**11. ເຂດເລືອກຕັ້ງເມືອງຊະນະຄາມ ມີ 05 ທ່ານ, ຍິງ 02 ທ່ານ ຄື:**

1) ທ່ານ ແກ້ວ ພົມມະວົງ

2) ທ່ານ ພັທ ບົວຂາວ ກູດແກ້ວ

3) ທ່ານ ນາງ ໃສແສງຈັນ ແສງພະຈັນ

4) ທ່ານ ນາງ ທິດສະຫວັດ ສິງພະຈັນ

5) ທ່ານ ໂພຄຳ ແສງດາລາ.

# ປາຖະກະຖາຫວນຄືນວັນສ້າງຕັ້ງກອງທັບປະຊາຊົນລາວ



(ສພຂ) - ວັນທີ 6 ມີນາຜ່ານມາ, ທີ່ສະພາປະຊາຊົນແຂວງ (ສພຂ) ຄຳມ່ວນ ໄດ້ມີພິທີປາຖະກະຖາວັນສ້າງຕັ້ງກອງທັບປະຊາຊົນລາວຄົບຮອບ77 ປີ (20 ມັງກອນ 1949-20 ມັງກອນ 2026) ໂດຍການຫວນຄືນຂອງທ່ານບົວພັນແສງຈັນ ຮອງປະທານສະພາປະຊາຊົນຂັ້ນແຂວງ; ມີຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ, ຄະນະກຳມະການ, ຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ, ຫົວໜ້າຂະແໜງ-ຮອງຫົວໜ້າຂະແໜງ ຕະຫຼອດຮອດພະນັກງານ-ລັດຖະກອນພາຍໃນສພຂ ເຂົ້າຮ່ວມຮັບຟັງ.

ທ່ານ ບົວພັນ ແສງຈັນ ໄດ້ຫວນຄືນເຖິງປະຫວັດການກຳເນີດຂອງກອງທັບປະຊາຊົນລາວ, ຜົນງານ, ໄຊຊະນະ ແລະ ການເຕີບໃຫຍ່ຂະຫຍາຍຕົວໃນແຕ່ລະໄລຍະ ໂດຍສະເພາະໄລຍະດຳເນີນການປະຕິວັດຕໍ່ສູ້ປົດປ່ອຍຊາດ, ການປະຕິບັດສອງໜ້າທີ່ຍຸດທະສາດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ; ຕະຫຼອດໄລຍະ 77 ປີ ຜ່ານມາ ກອງທັບປະຊາຊົນລາວ ໄດ້ຕໍ່ສູ້ຕ້ານຈັກກະພັດຜູ້ຮຸກຮານທັງແບບເກົ່າ ແລະ ແບບໃໝ່ ເພື່ອປົກຮັກສາປະເທດຊາດ ດ້ວຍນ້ຳໃຈອັນເດັດດ່ຽວໜຽວແໜ້ນ ຕໍ່ສູ້ບໍ່ຍອມຈຳນົນຢ່າງອົງອາດກ້າຫານ ດ້ວຍຄວາມພິລະອາດຫານຂອງຜູ້ນຳ ແລະ ປະຊາຊົນລາວ ເຊິ່ງສ່ອງແສງເຖິງຜົນງານອັນຍິ່ງໃຫຍ່ ແລະ ຄຸນສົມບັດສົນທຳປະຕິວັດອັນຜ່ອງໃສ, ຄວາມສະຫຼຽວສະຫຼາດ ທີ່ມີໄຫວພິບທີ່ຄ່ອງແຄ້ວ, ມີຄວາມມານະອົດທົນ,ເດັດດ່ຽວ,ເຂັ້ມແຂງ, ມີເຫດ-ຜົນ, ເຮັດແທ້ທຳຈິງ, ມີຄວາມກ້າຫານ ແລະ ຄວາມເສຍສະຫຼະອັນສູງສົ່ງ ກັບພາລະກິດຕໍ່ສູ້ປົດປ່ອຍຊາດຂອງບັນດາທ່ານຜູ້ນຳທີ່ແສນເຄົາລົບຮັກຂອງປວງຊົນລາວທັງຊາດ, ຍາດໄດ້ເອກະລາດນຳເອົາຄວາມອຸດົມສົມບູນພູນສຸກມາສູ່ປະເທດຊາດລາວເຮົາຢ່າງສະຫງ່າຜ່າເຜີຍຂຶ້ນໃນວັນທີ 2 ທັນວາ 1975.




# ສົມທົບທຶນເຈາະນ້ຳບາດານ ໃຫ້ຄ້າຍຄຸມຂັງ-ດັດສ້າງ ປກສ ແຂວງ



(ສພຂ) - ວັນທີ 10 ມີນານີ້ ທີ່ຄ້າຍຄຸມຂັງ-ດັດສ້າງ ປກສ ແຂວງສະຫວັນນະເຂດ, ໄດ້ມີພິທີມອບ-ຮັບສົມທົບທຶນເຈາະນ້ຳບາດານ ມູນຄ່າ 60 ລ້ານກີບ ໃຫ້ແກ່ຄ້າຍຄຸມຂັງ-ດັດສ້າງ ປກສ ແຂວງ ໂດຍການກ່າວມອບທ່ານ ກົງແກ້ວ ມີວໍລະຈັກ ປະທານສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ ແລະ ກ່າວຮັບຂອງທ່ານ ພັອ. ວົງຄຳ ອິນທະບານ ຮອງຫົວໜ້າກອງບັນຊາການ ປກສ ແຂວງ ພ້ອມດ້ວຍຄະນະນຳ ແລະ ພະນັກງານ ຂອງຄ້າຍຄຸມຂັງ-ດັດສ້າງ ປກສ ແຂວງ ເຂົ້າຮ່ວມເປັນສັກຂີພະຍານ.

ທັງນີ້, ເພື່ອແກ້ໄຂບັນຫາການຂາດແຄນນ້ຳ ແລະ ສ້າງເງື່ອນໄຂດ້ານສຸຂະອະນາໄມ ໃຫ້ແກ່ຄ້າຍຄຸມຂັງ ໃຫ້ມີນ້ຳໃຊ້ຢ່າງພຽງພໍ ແລະ ຍືນຍົງ;

ວັນດຽວກັນ, ທ່ານ ພູທອນ ພຸດທະຂັນຕິ ຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ ສົບທົບກັບສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງຈຳພອນ ໄດ້ມອບເຄື່ອງຊ່ວຍເຫຼືອບັນເທົາທຸກແກ່ຄອບຄົວ ທ່ານ ວົງທອງ ເພື່ອລະວົງ ບ້ານນາຄູ (ກຸ່ມບ້ານທີ1) ເມືອງຈຳພອນ ແຂວງສະຫວັນນະເຂດ ມີເກີດອັກຄີໄພ ເປັນເງິນສົດຈຳນວນ 5 ຫ້າລ້ານກີບ ແລະ ເຄື່ອງອຸປະໂພກ ຈຳນວນໜຶ່ງອີກດ້ວຍ.

**(ນາງ ຄອນສະຫວັນ ເມກສະຫວັນ)**



# ຖອດຖອນບົດຮຽນການກະກຽມ ແລະ ດຳເນີນການເລືອກຕັ້ງຢູ່ແຂວງຈຳປາສັກ



(ສພຂ) - ວັນທີ 11 ມີນານີ້ ທີ່ສະໂມສອນແຂວງຈຳປາສັກ, ຄະນະກຳມະການເລືອກຕັ້ງຂັ້ນແຂວງ ແຂວງຈຳປາສັກ ໄດ້ເປີດກອງປະຊຸມສະຫຼຸບຖອດຖອນບົດຮຽນກ່ຽວກັບການກະກຽມ ແລະ ການດຳເນີນບັ້ນເລືອກຕັ້ງ ສະມາຊິກສະພາແຫ່ງຊາດ (ສສຊ)ຊຸດທີ X ແລະ ສະມາຊິກສະພາປະຊາຊົນແຂວງຈຳປາສັກ (ສສຂ) ຊຸດທີ V ໂດຍການເປັນປະທານຂອງ ທ່ານ ປອ.ອາລຸນໄຊ ສູນນະລາດ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງຈຳປາສັກ, ປະທານຄະນະກຳມະການເລືອກຕັ້ງຂັ້ນແຂວງ; ມີທ່ານ ສາຍທອງ ໄຊຍະວົງ ປະທານສະພາປະຊາຊົນແຂວງ, ຮອງປະທານຄະນະກຳມະການເລືອກຕັ້ງຂັ້ນແຂວງ ພ້ອມດ້ວຍບັນດາທ່ານກຳມະການ, ຄະນະປະຈຳການ, ຫົວໜ້າ-ຮອງຫົວໜ້າອະນຸກຳມະການ ຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ ແລະ ຂັ້ນເມືອງ ຄື: ນະຄອນປາກເຊ ແລະ 9 ເມືອງ ໃນທົ່ວແຂວງຈຳປາສັກ ເຂົ້າຮ່ວມ.

ທ່ານ ທິບພະສອນ ສະມາເລີກ ກຳມະການຄະນະກຳເລືອກຕັ້ງຂັ້ນແຂວງ,ອະນຸກຳມະການກອງເລຂານຸການ ໄດ້ຜ່ານຮ່າງບົດສະຫຼຸບການກະກຽມ ແລະ ການດຳເນີນບັ້ນເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V ເຊິ່ງຍົກໃຫ້ເຫັນສະພາບລວມ, ຕີລາຄາຜົນການຈັດຕັ້ງປະຕິບັດວຽກງານ ບາດກ້າວທີ 1 ຮອດບາດກ້າວທີ 3 ຕົ້ນຕໍແມ່ນວຽກງານເລຂານຸການ; ວຽກງານໂຄງປະກອບແລະບຸກຄະລາກອນ; ວຽກງານໂຄສະນາ, ປຸກລະດົມຂະບວນການ ແລະ ຍ້ອງຍໍ; ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ວຽກບໍລິຫານ, ພິທີການ ແລະ ງົບປະມານ; ພ້ອມນັ້ນ, ຍັງຍົກໃຫ້ເຫັນສະພາບລວມໃນການດຳເນີນການປ່ອນບັດເລືອກຕັ້ງ, ຜົນໄດ້ຮັບໃນການເລືອກຕັ້ງສສຊ-ສສຂ ແລະ ແຜນການຈັດຕັ້ງປະຕິບັດ ໃນບາດກ້າວທີ 4; ຈາກນັ້ນ, ໄດ້ພ້ອມກັນປະກອບຄຳເຫັນຕໍ່ເນື້ອໃນບົດສະຫຼຸບຢ່າງມີຈຸດສຸມ, ຕີລາຄາໄດ້ຈຸດດີ, ຈຸດອ່ອນ ແລະ ບົດຮຽນທີ່ຖອດຖອນໄດ້.

ທ່ານ ປອ. ອາລຸນໄຊ ສູນນະລາດ ກ່າວວ່າ: ກອງປະຊຸມຄັ້ງນີ້ເພື່ອຮັບປະກັນໃນການສະຫຼຸບຖອດຖອນບົດຮຽນການຈັດປະຕິບັດວຽກງານການກະກຽມແລະດຳເນີນບັ້ນເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V ໃນໄລຍະຜ່ານມາ ຕາມ 4 ບາດກ້າວ ໃຫ້ມີເນື້ອໃນເລິກເຊິ່ງ, ຄົບຖ້ວນ, ຖືກກັບຄວາມເປັນຈິງ ແລະ ເອກະພາບສູງ ຕໍ່ກັບໝາກຜົນງານທີ່ຍາດມາໄດ້ເຊິ່ງບັ້ນເລືອກຕັ້ງຄັ້ງນີ້ແມ່ນເຫດການທາງດ້ານເມືອງທີ່ມີຄວາມໝາຍສຳຄັນລະດັບຊາດ ທີ່ສະແດງໃຫ້ເຫັນເຖິງຄວາມສາມັກຄີເປັນປຶກແຜ່ນແລະຄວາມສາມາດໃນການນຳພາ-ຊີ້ນຳ, ການປະສານສົມທົບ ຂອງຄະນະພັກແຕ່ລະຂັ້ນ ນັບແຕ່ບາດກ້າວການກະກຽມ ຈົນຮອດມື້ລົງຄະແນນສຽງ ແລະ ການສັງລວມຜົນການເລືອກຕັ້ງ, ສາມາດຢັ້ງຢືນໄດ້ວ່າແຂວງຈຳປາສັກແມ່ນແຂວງໜຶ່ງ ທີ່ສາມາດປະຕິບັດໄດ້ຕາມ 4 ຄາດໝາຍໃຫຍ່ ໃນນັ້ນ, ຜົນສຳເລັດທີ່ພົ້ນເດັ່ນທີ່ສຸດແມ່ນສາມາດປຸກລະດົມມວນຊົນ ອອກມາໃຊ້ສິດປະຊາທິປະໄຕ ໄດ້ສູງເຖິງ 103.15% ລື່ນຄາດໝາຍ 3,15%.

**(ສົມວິຈິດ ໄຊມົນຕີ)**






# ຈົ່ງພາກັນໄປໃຊ້ສິດຂອງຕົນຢ່າງຄົບຖ້ວນ

**# ທິດດີ**

ມື້ກ່ອນຄໍລຳເຮົາໄດ້ສະເໜີບົດ: ເສີມຂະຫຍາຍສິດເປັນເຈົ້າ ແລະ ພັນທະຂອງພົນລະເມືອງ ເຊິ່ງກ່ຽວພັນກັບການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V ທີ່ຈະມີຂຶ້ນໃນວັນທີ 22 ກຸມພາ 2026.

ມື້ນີ້ ຈະນຳສະເໜີສິດເປັນເຈົ້າອຳນາດລັດຂອງປະຊາຊົນລາວບັນດາເຜົ່າແມ່ນແນວໃດ?

(ເຊິ່ງໄດ້ຄັດຈາກເອກະສານຄຳຖາມ-ຕອບ (1) ສຳລັບໂຄສະນາເຜີຍແຜ່ ແລະ ຮ່ຳຮຽນໃຫ້ຜູ້ມີສິດເລືອກຕັ້ງທົ່ວໄປ...)

ກ່ອນອື່ນຢາກເຂົ້າໃຈສິດເປັນເຈົ້າອຳນາດລັດແມ່ນແນວໃດນັ້ນ, ພວກເຮົາຈຶ່ງຮັບຮູ້ ແລະ ເຂົ້າໃຈຈະແຈ້ງກ່ຽວກັບຄຳສັບທີ່ວ່າ ອຳນາດລັດແມ່ນແນວໃດເສຍກ່ອນ; ອຳນາດລັດທີ່ນີ້ ໝາຍເຖິງ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ປະທານປະເທດ, ລັດຖະບານ ແລະ ອົງການປົກຄອງທຸກຂັ້ນ, ສານປະຊາຊົນ, ອົງການໄອຍະການປະຊາຊົນ, ອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດ ທັງໝົດເຫຼົ່ານັ້ນເອີ້ນວ່າ ອຳນາດລັດ ຫຼື ອົງການອຳນາດລັດ.

ສິດເປັນເຈົ້າອຳນາດລັດຂອງປະຊາຊົນລາວບັນດາເຜົ່າ ໄດ້ກຳນົດໄວ້ຢູ່ມາດຕາ 2 ຂອງລັດຖະທຳມະນູນ ແຫ່ງ ສປປລາວ ຄື: “ລັດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນ ລັດປະຊາທິປະໄຕ ປະຊາຊົນ. ອຳນາດທັງໝົດເປັນຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນ ຊຶ່ງປະກອບດ້ວຍບັນດາຊັ້ນຄົນຢູ່ໃນສັງຄົມ ໂດຍແມ່ນກຳມະກອນ, ກະສິກອນ ແລະ ນັກຮຽນຮູ້ປັນຍາຊົນເປັນຫຼັກແຫຼ່ງ".

**ໜຶ່ງ:** ອຳນາດລັດເປັນຂອງປະຊາຊົນ ກໍຍ້ອນວ່າອຳນາດລັດຂອງພວກເຮົາແມ່ນໝາກຜົນອັນຍິ່ງໃຫຍ່ທີ່ປະຊາຊົນລາວບັນດາເຜົ່າຍາດມາໄດ້ໃນພາລະກິດຕໍ່ສູ້ປົດປ່ອຍຊາດອັນພິລະອາດຫານຕ້ານສັດຕູຜູ້ຮຸກຮານ, ຍາດເອົາເອກະລາດ ແລະ ອິດສະຫຼະພາບ ມາໃຫ້ປະເທດຊາດ ແລະ ປະຊາຊົນບັນດາເຜົ່າ ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ.

**ສອງ:** ອຳນາດລັດໂດຍປະຊາຊົນ ກໍຍ້ອນວ່າ ອຳນາດລັດຂອງພວກເຮົາ ແມ່ນປະຊາຊົນລາວບັນດາເຜົ່າເປັນຜູ້ສ້າງຕັ້ງ ໂດຍຜ່ານການປ່ອນບັດເລືອກຕັ້ງເອົາຕົວແທນຂອງຕົນ ຄື: ສະພາແຫ່ງຊາດ ແລະ ສະພາປະຊາຊົນທ້ອງຖິ່ນ (ຂັ້ນແຂວງ) ແລ້ວຈຶ່ງສ້າງຕັ້ງບັນດາອົງການອຳນາດລັດຂອງລະບອບປະຊາທິປະໄຕປະຊາຊົນ.

**ສາມ:** ອຳນາດລັດເພື່ອຜົນປະໂຫຍດຂອງປະຊາຊົນ ກໍຍ້ອນວ່າ ບັນດາອົງການອຳນາດລັດຂອງພວກເຮົາ ຖືເອົາປະຊາຊົນເປັນກົກ, ເປັນກຳລັງແຮງ ເພື່ອປົກປັກຮັກສາ ແລະ ສ້າງສາປະເທດຊາດ. ອີກປະການໜຶ່ງ, ໃນຕະຫຼອດ 50 ປີ ທີ່ຜ່ານມາບັນດາອົງການອຳນາດລັດຂອງພວກເຮົາລ້ວນແຕ່ເຄື່ອນໄຫວເພື່ອຮັບໃຊ້ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າທັງນັ້ນ ຕົວຢ່າງ: ສະພາແຫ່ງຊາດ ແລະ ລັດຖະບານ ກໍຄືສະພາປະຊາຊົນຂັ້ນແຂວງ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ ໄດ້ວາງແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ແຜນເງິນຕາ ໄລຍະ 5 ປີ ມາແລ້ວ 9 ຄັ້ງ ແລະ ແຕ່ລະປີ; ພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ, ສ້າງບ້ານພັດທະນາ ແລະ ອື່ນໆ ເຮັດໃຫ້ຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນລາວບັນດາເຜົ່າ ເຖິງວ່າຍັງມີຄວາມຫຍຸ້ງຍາກຫຼາຍຢ່າງ ແຕ່ກໍໄດ້ຮັບການປັບປຸງໃຫ້ນັບມື້ນັບດີຂຶ້ນ ທຽບໃສ່ຫ້າສິບປີຫຼັງນີ້. ທັງໝົດເຫຼົ່ານັ້ນ, ສະແດງໃຫ້ເຫັນວ່າ ການເຄື່ອນໄຫວຂອງອຳນາດລັດຂອງພວກເຮົາ ລ້ວນແຕ່ແມ່ນເພື່ອຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ.

ສະນັ້ນ, ການເລືອກຕັ້ງຄັ້ງນີ້ແມ່ນມີຄວາມສຳຄັນຍ້ອນວ່າ:

ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ແມ່ນການເສີມຂະຫຍາຍ ແລະ ປະຕິບັດສິດປະຊາທິປະໄຕຂອງປະຊາຊົນລາວບັນດາເຜົ່າ ເຂົ້າໃນການປັບປຸງ, ບູລະນະລະບົບອົງການອຳນາດລັດຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ເຂັ້ມແຂງ ເປັນຕົ້ນແມ່ນປັບປຸງບູລະນະ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃນຖານະເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ.

ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ແມ່ນມີຂຶ້ນໃນເວລາທີ່ພັກປະຊາຊົນປະຕິວັດລາວ ກຳອຳນາດມາໄດ້ 50 ປີ ແລະ ກໍແມ່ນ 50 ປີ ແຫ່ງການເຕີບໃຫຍ່ຂະຫຍາຍຕົວຂອງລັດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກໍຄືສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຢູ່ໃນທ່າມກາງບັນຍາກາດທີ່ສະພາບການຂອງໂລກ, ພາກພື້ນ ພວມມີການຜັນແປຢ່າງສັບສົນ, ຄາດຄະເນໄດ້ຍາກ ທີ່ສົ່ງຜົນກະທົບທາງດ້ານຕັ້ງໜ້າ ແລະ ຫຍໍ້ທໍ້ ຕໍ່ພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດຂອງພວກເຮົາ; ຢູ່ພາຍໃນປະເທດ, ພວກເຮົາຍັງສືບຕໍ່ປະສົບກັບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ມາເປັນເວລາຫຼາຍປີ. ສະນັ້ນ, ການເລືອກຕັ້ງຄັ້ງນີ້ ຈຶ່ງມີຄວາມໝາຍສຳຄັນເປັນພິເສດ ເຊິ່ງຮຽກຮ້ອງໃຫ້ພົນລະເມືອງລາວຜູ້ມີສິດເລືອກຕັ້ງທຸກຄົນ ຍິ່ງຕ້ອງເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນພາຍໃນຊາດ ແລະ ລະຫວ່າງເຜົ່າຕ່າງໆ, ພ້ອມກັນໄປໃຊ້ສິດປ່ອນບັດເລືອກຕັ້ງໃຫ້ຄົບຖ້ວນ ແລະ ໃຫ້ເລືອກເອົາຜູ້ມີມາດຕະຖານ ແລະ ເງື່ອນໄຂຄົບຖ້ວນກວ່າໝູ່ ເປັນສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ເພື່ອສາມາດເຮັດຫຼ້ອນໜ້າທີ່ອັນມີກຽດໃນຖານະເປັນຕົວແທນໃຫ້ແກ່ສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ.

ສະນັ້ນ, ສິດເປັນເຈົ້າຂອງພົນລະເມືອງແມ່ນກຽດສັກສີຂອງໝົດທຸກຄົນ ຈຶ່ງພ້ອມກັນໄປໃຊ້ສິດຂອງຕົນໃຫ້ຄົບຖ້ວນ.

# 22 ກຸມພາ ວັນບຸນປາງໃຫຍ່ຂອງຊາດ

ການເລືອກຕັ້ງສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ຊຸດທີ V ໃນວັນທີ 22 ກຸມພາ 2026 ທີ່ຈະມາເຖິງນີ້ ເປັນພາກສ່ວນໜຶ່ງໃນການປັບປຸງບູລະນະລະບົບການຈັດຕັ້ງ ແລະ ບຸກຄະລາກອນຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອໃຫ້ມີຄວາມເຂັ້ມແຂງ, ໜັກແໜ້ນ; ສະນັ້ນ, ການເລືອກຕັ້ງຄັ້ງນີ້ ຈຶ່ງແມ່ນໜ້າທີ່ການເມືອງ, ເປັນຄວາມຮັບຜິດຊອບຂອງທຸກການຈັດຕັ້ງທີ່ກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນ. ສະນັ້ນ, ການກະກຽມໃຫ້ແກ່ການເລືອກຕັ້ງ ແລະ ດຳເນີນການເລືອກຕັ້ງ ພ້ອມທັງປຸກລະດົມປະຊາຊົນລາວບັນດາເຜົ່າເຂົ້າຮ່ວມໃຫ້ເປັນຂະບວນຟົດຟື້ນ ຖືເອົາວັນເລືອກຕັ້ງວັນທີ 22 ກຸມພາ ເປັນປາງບຸນໃຫຍ່ຂອງຊາດ; ດຳເນີນໄປດ້ວຍບັນຍາກາດເບີກບານມ່ວນຊື່ນ, ມີປະຊາທິປະໄຕ, ຖືກຕ້ອງຕາມລັດຖະທຳມະນູນ, ກົດໝາຍ ເຮັດໃຫ້ການເລືອກຕັ້ງບັນລຸຜົນສຳເລັດຕາມຄາດໝາຍ.

ຜູ້ຂຽນຂໍອະນຸຍາດນຳສະເໜີບາງຂໍ້ມູນສຳຄັນສຳລັບການເລືອກຕັ້ງຄັ້ງນີ້ເຊັ່ນວ່າ: ຂໍ້ຫ້າມສຳລັບການເລືອກຕັ້ງ

**I. ຂໍ້ຫ້າມສຳລັບຜູ້ມີສິດເລືອກຕັ້ງມີ:**

1. ບິດເບືອນແນວທາງນະໂຍບາຍ ແລະ ຄວາມເປັນຈິງກ່ຽວກັບການເລືອກຕັ້ງ;

2. ໂຄສະນາໃສ່ຮ້າຍປ້າຍສີ, ທັບຖົມ ຜູ້ສະໝັກຮັບເລືອກຕັ້ງ;

3. ປັ່ນປ່ວນ, ສ້າງສະຖານະການກໍ່ຄວາມບໍ່ສະຫງົບໃນໜ່ວຍເລືອກຕັ້ງ;

4. ແຊກແຊງການຂີດບັດລົງຄະແນນສຽງຂອງຜູ້ອື່ນ ຫຼື ທຳລາຍບັດເລືອກຕັ້ງ;

5. ຂີດບັດລົງຄະແນນສຽງຂອງຕົນແບບຊະຊາຍ ຫຼື ບໍ່ຖືກຕ້ອງຕາມລະບຽບການ;

6. ເປີດເຜີຍ, ເຜີຍແຜ່ ເອກະສານກ່ຽວກັບວຽກງານເລືອກຕັ້ງທີ່ຍັງບໍ່ເປັນທາງການລົງພາຫະນະສື່ມວນຊົນ;

7. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ.

**II. ຂໍ້ຫ້າມສຳລັບຜູ້ສະໝັກຮັບເລືອກຕັ້ງມີ:**

1. ໂຄສະນາໃສ່ຮ້າຍປ້າຍສີ, ທັບຖົມ ຜູ້ສະໝັກຮັບເລືອກຕັ້ງດ້ວຍກັນ;

2. ໃຫ້ສິນບົນ, ຊື້ຈ້າງ, ຈອບອອຍ ຜູ້ມີສິດເລືອກຕັ້ງ ດ້ວຍຮູບການຕ່າງໆ;

3. ໂຄສະນາຫາສຽງໃນວັນເລືອກຕັ້ງ;

4. ເຂົ້າຫຍຸ້ງກ່ຽວການນັບບັດລົງຄະແນນສຽງຂອງຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ;

5. ເປີດເຜີຍ, ເຜີຍແຜ່ ເອກະສານກ່ຽວກັບວຽກງານເລືອກຕັ້ງທີ່ຍັງບໍ່ເປັນທາງການລົງພາຫະນະສື່ມວນຊົນ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**III. ຂໍ້ຫ້າມສຳລັບຄະນະກຳມະການເລືອກຕັ້ງ ແລະ ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງມີ:**

1. ລຳອຽງ, ເຂົ້າຂ້າງອອກຂາ ຜູ້ສະໝັກຮັບເລືອກຕັ້ງໃດໜຶ່ງ ເປັນຕົ້ນ ໃນເວລານັບບັດລົງຄະແນນສຽງ;

2. ໃສ່ຮ້າຍປ້າຍສີ, ທັບຖົມ ບົດບາດ ແລະ ຊື່ສຽງຂອງຜູ້ສະໝັກຮັບເລືອກຕັ້ງໃດໜຶ່ງ;

3. ເມີນເສີຍຕໍ່ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຕົນ ເປັນຕົ້ນ ການຄຸ້ມຄອງງົບປະມານ, ອຸປະກອນຮັບໃຊ້ການເລືອກຕັ້ງ;

4. ຮັບ ຫຼື ໃຫ້ສິນບົນ ຈາກຜູ້ມີສິດເລືອກຕັ້ງ ແລະ ຜູ້ສະໝັກຮັບເລືອກຕັ້ງ;

5. ຂີດບັດແທນຜູ້ມີສິດເລືອກຕັ້ງ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງບັດ;

6. ລະເມີດກຳນົດເວລາປ່ອນບັດເລືອກຕັ້ງຕາມທີ່ໄດ້ກຳນົດໄວ້ໃນມາດຕາ 34 ຂອງກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ;

7. ເປີດເຜີຍ, ເຜີຍແຜ່ ເອກະສານກ່ຽວກັບວຽກງານເລືອກຕັ້ງທີ່ຍັງບໍ່ເປັນທາງການລົງພາຫະນະສື່ມວນຊົນ;

8. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ.

**IV. ຂໍ້ຫ້າມສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ມີ:**

1. ຂັດຂວາງຜູ້ອື່ນບໍ່ໃຫ້ເຂົ້າຮ່ວມການເລືອກຕັ້ງ;

2. ເຂົ້າໄປຫຍຸ້ງກ່ຽວໃນເວລາຜູ້ມີສິດເລືອກຕັ້ງດຳເນີນການຂີດບັດ;

3. ໂຄສະນາຫາສຽງໃຫ້ຜູ້ສະໝັກຮັບເລືອກຕັ້ງໃດໜຶ່ງໃນວັນເລືອກຕັ້ງ ແລະ ເວລາດຳເນີນການປ່ອນບັດ;

4. ກໍ່ຄວາມວຸ້ນວາຍໃນການດຳເນີນການເລືອກຕັ້ງ ອັນເປັນການລະເມີດກົດໝາຍ ແລະ ລະບຽບການ;

5. ຍຸແຍ່, ຊວນເຊື່ອ ໃຫ້ຜູ້ສະໝັກຮັບເລືອກຕັ້ງໃນເຂດດຽວກັນນັ້ນ ມີຄວາມເຂົ້າໃຈຜິດເຊິ່ງກັນແລະກັນ;

6. ໃຫ້ ຫຼື ຮັບສິນບົນ ຫຼື ການຊື້ຈ້າງ, ຈອບອອຍ ຈາກຜູ້ສະໝັກຮັບເລືອກຕັ້ງດ້ວຍຮູບການຕ່າງໆ;

7. ເປີດເຜີຍ, ເຜີຍແຜ່ ເອກະສານກ່ຽວກັບວຽກງານເລືອກຕັ້ງທີ່ຍັງບໍ່ເປັນທາງການລົງພາຫະນະສື່ມວນຊົນ;

8. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ.

ທັງໝົດນັ້ນ, ແມ່ນຂໍ້ຫ້າມທີ່ສຳຄັນໃນບັ້ນເລືອກຕັ້ງສະມາຊິກສະພາແຫ່ງຊາດ ກໍຄືສະພາປະຊາຊົນຂັ້ນແຂວງ ທີ່ທົ່ວສັງຄົມຄວນໄດ້ຮັບຮູ້ນຳ.

# ມີຫຍັງແດ່? ໃນກອງປະຊຸມຄັ້ງປະຖົມມະລຶກ

# ທິດດີ

ພາຍຫຼັງການເລືອກຕັ້ງດຳເນີນໄປຢ່າງມີຜົນສຳເລັດຕາມແຜນການວາງອອກ... ມີເພື່ອນຜູ້ອ່ານທີ່ຕິດຕາມຂ່າວສານບ້ານເມືອງຖາມມາວ່າ: ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ທີ່ຈະໄຂຂຶ້ນນີ້ ມີຄວາມສຳຄັນຫຍັງແດ່?.

ຕອບສະໜອງຈິດໃຈຂອງຜູ້ອ່ານ, ຜູ້ຂຽນຈຶ່ງໄປຊອກຂໍ້ມູນຈາກກົດໝາຍວ່າດ້ວຍ ສະພາແຫ່ງຊາດ (ສະບັບປັບປຸງ) ເລກທີ 56/ສພຊ, ລົງວັນທີ 28 ມິຖຸນາ 2024 ດັ່ງນີ້:

ໃນພາກທີ IV: ກອງປະຊຸມ ໝວດທີ 1: ກອງປະຊຸມສະພາແຫ່ງຊາດ

• ມາດຕາ 54 (ປັບປຸງ) ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ

ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ແມ່ນກອງປະຊຸມສະໄໝສາມັນເທື່ອທີໜຶ່ງຂອງສະພາແຫ່ງຊາດຊຸດນັ້ນ ເປີດຂຶ້ນພາຍໃນເວລາຫົກສິບວັນ ພາຍຫຼັງສຳເລັດການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດໃໝ່ ເຊິ່ງແມ່ນປະທານສະພາແຫ່ງຊາດຊຸດເກົ່າ ເປັນປະທານ ແລະ ຊີ້ນຳກອງປະຊຸມ ຈົນກວ່າໄດ້ເລືອກຕັ້ງປະທານສະພາແຫ່ງຊາດຊຸດໃໝ່.

ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຟັງການລາຍງານຂອງຄະນະກຳມະການເລືອກຕັ້ງລະດັບຊາດ ກ່ຽວກັບຜົນການເລືອກຕັ້ງ ແລະ ການຢັ້ງຢືນຄຸນລັກສະນະຂອງສະມາຊິກສະພາແຫ່ງຊາດ;

2. ເລືອກຕັ້ງປະທານສະພາແຫ່ງຊາດ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ ຊຸດເກົ່າ;

3. ເລືອກຕັ້ງຮອງປະທານສະພາແຫ່ງຊາດ ແລະ ກຳມະການຄະນະປະຈຳສະພາແຫ່ງຊາດ ຕາມການສະເໜີຂອງປະທານສະພາແຫ່ງຊາດ;

4. ເລືອກຕັ້ງປະທານປະເທດ ແລະ ຮອງປະທານປະເທດ ຕາມການສະເໜີຂອງຄະນະປະຈຳສະພາ;

5. ເລືອກຕັ້ງນາຍົກລັດຖະມົນຕີ ຕາມການສະເໜີຂອງປະທານປະເທດ;

6. ເລືອກຕັ້ງຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານສານປະຊາຊົນສູງສຸດ, ປະທານອົງການກວດກາແຫ່ງລັດ ແລະ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ, ປະທານອົງການກວດສອບແຫ່ງລັດ ຕາມການສະເໜີຂອງປະທານປະເທດ;

7. ພິຈາລະນາ, ຮັບຮອງເອົາການແຕ່ງຕັ້ງ ປະທານກຳມາທິການ ແລະ ຫົວໜ້າຫ້ອງວ່າການສະພາແຫ່ງຊາດ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;

8. ພິຈາລະນາ, ຮັບຮອງເອົາການສ້າງຕັ້ງ ຫຼື ຍຸບເລີກ ກົງຈັກຂອງສະພາແຫ່ງຊາດ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;

9. ພິຈາລະນາ, ຮັບຮອງເອົາການສະເໜີຂອງນາຍົກລັດຖະມົນຕີ ກ່ຽວກັບໂຄງປະກອບກົງຈັກຂອງລັດຖະບານ, ການແຕ່ງຕັ້ງບັນດາຮອງນາຍົກລັດຖະມົນຕີ ແລະ ສະມາຊິກລັດຖະບານ;

10. ພິຈາລະນາ, ຮັບຮອງເອົາແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຫ້າປີ;

11. ພິຈາລະນາ, ຮັບຮອງເອົາແຜນການເຄື່ອນໄຫວວຽກງານ ຫ້າປີ ຂອງສະພາແຫ່ງຊາດ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;

12. ພິຈາລະນາ, ຮັບຮອງເອົາແຜນການສ້າງ ແລະ ປັບປຸງກົດໝາຍ ຫ້າປີຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;

13. ພິຈາລະນາ, ຮັບຮອງເອົາແຜນການເຄື່ອນໄຫວວຽກງານ ຫ້າປີ ຂອງອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດ;

14. ພິຈາລະນາ, ຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ.

ໝາຍຄວາມວ່າ: ກອງປະຊຸມນີ້ ມີທັງໝົດ 14 ບັນຫາສຳຄັນ; ສະນັ້ນ, ເພື່ອນຜູ້ອ່ານທັງຫຼາຍຕ້ອງໄດ້ຕິດຕາມຢ່າງໃກ້ຊິດນໍ! ແນ່ນອນຈະຕ້ອງມີການຖ່າຍທອດສົດຜ່ານໂທລະພາບ ແລະ ມີການສ່ອງແສງອອກຕາມສື່ມວນຊົນຢ່າງກວ້າງຂວາງ.

ຜູ້ຂຽນຫວັງວ່າ ເພື່ອນຜູ້ອ່ານຄົງຈະຮັບຊາບຢ່າງກະຈ່າງແຈ້ງນໍ.

ອາດ ກະວີລາວ

# ແກງເຫັດບົດ

# ຄົນປາຍທາງ

❊ ມື້ໜຶ່ງ ຮຽມລັດລ້ຽວ
ຈຸດປະສົງເລາະ
ຫາເຫັດບົດຍາມແລ້ງ
ແສງແດດໃສເຈີດຈ້າ
ກາຍທົ່ງນາດົງ
ແອ່ວດົງດອນກວ້າງ
ມາແກງຕອນຄ່ຳ
ຕຳເຟືອງແຫ້ງຫ່ຽວແຫງ

❊ ຍ່າງກາຍດົງດ່ານຄ້ອຍ
ລະງົມງັນເຂົາຂັນ
ກະຮອກແຕເຕັ້ນເຕັ້ນ
ພາກັນເຫາະຫອບລີ້
ຝູງນົກບັນສຽງ
ຮຽກຄອນອອນເອີ້ນ
ຝູງລິງຫຼາຍຫຼາກ
ທະຍາຍຂຶ້ນຫງ່າຍາງ

❊ ຍ່າງອອກດົງລັດຈ້ອນ
ເຫັນເຫັດລຽງລິງລາຍ
ຈັ່ງວ່າງາມເອົາຮ້າຍ
ຄຶດຮຸມໆຮ່ຳຮ້ອນ
ຂອນໃຫຍ່ເຄີຍມີ
ຈໍ່ຈຸມບານພ້ອມ
ຂອນກຸງຈົນກ່ານ
ຊິຄືນບ້ານເພື່ອແກງ ເລີຍບໍ?

❊ ນ້ຳລາຍໄຫຼຫຼັ່ງຍ້ອຍ
ຍ່າງຕໍ່ຫາແນວແກງ
ມາຄອກງົວແລສິ້ງ
ພົກເຊືອທັງບວບນ້ອຍ
ກົນເອືອກລົງຄຳ
ໃສ່ກັນກົມກິ້ງ
ຖຽງນາງອຍໂຄກ
ໝາການອຍພ້ອມຜ່ຳມີ

❊ ຈາກນັ້ນ ກັບຕ່າວບ້ານ
ມານດາແກງ
ຍໍໃສ່ເທິງພາເຂົ້າ
ບ່ວງຕັກຍໍຍົກຂຶ້ນ ລືມເປົ່າຮົນເຮັ່ງຮ້ອນ
ຈວນຄ່ຳພໍດີ
ໃສ່ຂະແຍງຫອມກຸ້ມ
ອາຍກະຈວນກຸ້ມທົ່ວ
ຄາຍຖິ້ມເກືອບບໍ່ທັນ ຮ້ອນເດ!



# ຫົກຫາຍ ລະບາຍ

(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)

# ສຽມທ້ຽນ

❊ **ກະ**ຊວງອຸດສາຫະກຳ ແລະ ການຄ້າ ໃຫ້ຮູ້ວ່າ: ຈາກສະພາບລາຄາຕົ້ນທຶນການນຳເຂົ້ານ້ຳມັນເຊື້ອໄຟຈາກຕ່າງປະເທດສູງ ຈຶ່ງຈະມີການປັບຂຶ້ນລາຄານ້ຳມັນເຊື້ອໄຟ ຖືເປັນການປັບຂຶ້ນສູງທີ່ສຸດໃນຮອບປີ ຂໍໃຫ້ມີສະຕິຕັ້ງຮຽງຮ່ວມປະສານ ທັນທີດມາປະຢັດ ແຫຼ່ງພະລັງງານຊົມໃຊ້ ການໄປມາສັນເຄື່ອນ ຈ່າເປັນທຸກສິ່ງຢ່າງ ແຕ່ສຳຄັນຫຼືບໍ່ນັ້ນ ພິຈາລະນາເບິ່ງບ່ອນເດີນ **ແຫ້ໄດ໋!**

❊ **ຕາມ**ຂ່າວໃຫ້ຮູ້ວ່າ: ເດືອນມີນານີ້ ຈະມີການເປີດໃຫ້ບໍລິການຟຣີລົດເມດ່ວນ BRT ໃນລະຫວ່າງວັນທີ 10 ມີນາທາ 9 ພຶດສະພາ 2026 ເຫັນຂ່າວແລ້ວຢາກຍໍຍົກຍ້ອງ ຮຽງຮ່ວມຍິນດີ **ບ່າເດ!** ເປັນວິທີການປະຢັດ ເພື່ອປະຊາຊົນຊົມໃຊ້ ຂໍໃຫ້ປະຕິບັດແທ້ ຕາມແຜນການວາງອອກ ຢ່າໃຫ້ຄອງບົ່ງເກົ້ ເລີງເລື້ອຍລ່າຍແລ້ວລືມ **ນົ້ນນາ!**

# ຊອບຍິ້ມ

# ພົ້ງລຶ່ງ

## ເລື່ອງ: ຄູ່ສ້າງຄູ່ສົມ

ສອງຜົວເມຍຕັດສິນໃຈຈົບຊີວິດໂຕເອງ ເພື່ອໜີບັນຫາຕ່າງໆທີ່ຖາໂຖມເຂົ້າມາໃນຊີວິດ, ທັງຄູ່ຕັດສິນໃຈຈະໄປໂດດໜ້າຜາທີ່ພົບກັບເທື່ອທຳອິດ.

ຫຼັງຈາກນັບ 1... 2... 3... ຜູ້ເປັນຜົວກໍໄດ້ໂດດລົງໄປທັນທີ, ແຕ່ຜູ້ເປັນເມຍຍືນຢູ່ບ່ອນເກົ່າ ເບິ່ງຜູ້ເປັນຜົວຄ່ອຍໆຕົກລົງໄປສູ່ພື້ນ ພ້ອມຍິ້ມຢູ່ມູມປາກ; ຫຼັງຈາກນັ້ນບໍ່ດົນ, ກໍເຫັນແຜ່ນຈ້ອງຂອງຜູ້ເປັນຜົວຄ່ອຍໆກາງອອກ...!!!



# ສຸພາສິດ-ຄະຕິເຕືອນໃຈ

# ດອກຫຍ້າ

"ຖ້າຝົນບໍ່ຕົກ ກໍບໍ່ຮູ້ວ່າຫຼັງຄາມັນຮົ່ວ
ຄົນຈະດີຫຼືຊົ່ວ ເຮົາບໍ່ຮູ້ ຖ້າບໍ່ໄດ້ພົບເຈີກັບໂຕເອງ"

# ສຳເລັດການລົງຄະແນນສຽງເລືອກຕັ້ງສະພາຕ່ຳເນປານ

(Xinhua) - ການລົງຄະແນນສຽງເລືອກຕັ້ງສະພາຜູ້ແທນປະຊາຊົນຊຸດໃໝ່ຂອງສາທາລະນະລັດປະຊາທິປະໄຕສະຫະພັນເນປານ ໄດ້ສິ້ນສຸດລົງໃນວັນພະຫັດທີ 5 ມີນານີ້ ເຊິ່ງເປີດໃຫ້ປ່ອນບັດຕັ້ງແຕ່ເວລາ 7:00-17:00 ໂມງ ຕາມເວລາທ້ອງຖິ່ນ; ໃນການຖະແຫຼງຂ່າວເມື່ອວັນພຸດ, ຄະນະກຳມະການເລືອກຕັ້ງກ່າວວ່າຈະປະກາດຜົນການເລືອກຕັ້ງເບື້ອງຕົ້ນພາຍໃນ 24 ຊົ່ວໂມງ ຫຼັງຈາກການເກັບຮວບຮວມຫີບບັດເລືອກຕັ້ງ.

ການຖະແຫຼງຂ່າວໃນວັນທີ 5 ມີນາ, ຣາມ ປຣາສາດ ບັນດາຣີ (Ram Prasad Bhandari) ຮັກສາການປະທານຄະນະກຳມະການເລືອກຕັ້ງກ່າວອ້າງວ່າການເລືອກຕັ້ງສ່ວນໃຫຍ່ດຳເນີນໄປຢ່າງສະຫງົບ ແລະ ເປັນລະບຽບຮຽບຮ້ອຍໃນທົ່ວປະເທດ, ມີຜູ້ມາໃຊ້ສິດ 18,903,689 ຄົນ ຫຼື ປະມານ 60% ຂອງຜູ້ມີສິດເລືອກຕັ້ງທັງໝົດ ໂດຍມີຜູ້ສະໝັກຮັບເລືອກຕັ້ງຈາກພັກການເມືອງ ແລະ ຜູ້ສະໝັກເອກະລາດລວມທັງໝົດ 6,541 ຄົນ ລົງແຂ່ງຂັນເພື່ອຊິງ 275 ທີ່ນັ່ງໃນສະພາຕ່ຳ ໃນນັ້ນ, 165 ທີ່ນັ່ງ ຈະຖືກເລືອກຕັ້ງໂດຍກົງ ເຊິ່ງເອີ້ນກັນວ່າລະບົບສຽງສ່ວນຫຼາຍ, ສ່ວນອີກ 110 ທີ່ນັ່ງ ຈະຖືກເລືອກຕັ້ງພາຍໃຕ້ລະບົບການເລືອກຕັ້ງແບບສັດສ່ວນ ຕາມສ່ວນແບ່ງຄະແນນສຽງທີ່ແຕ່ລະພັກການເມືອງໄດ້ຮັບ.




# Vietnam ບັງຄັບໃຊ້ກົດໝາຍ AI ເປັນປະເທດທຳອິດໃນອາຊຽນ



(AFP) - ກົດໝາຍວ່າດ້ວຍການຄວບຄຸມປັນຍາປະດິດ (law regulating artificial intelligence) ຂອງຫວຽດນາມ ມີຜົນບັງຄັບໃຊ້ຢ່າງເປັນທາງການໃນວັນທີ 1 ມີນາ 2026, ຖືເປັນປະເທດທຳອິດໃນອາຊີຕາເວັນອອກສຽງໃຕ້ ທີ່ມີຂອບກົດໝາຍທີ່ສົມບູນແບບກ່ຽວກັບເຕັກໂນໂລຊີທີ່ເຕີບໂຕຢ່າງວ່ອງໄວນີ້; ກົດໝາຍດັ່ງກ່າວ ທີ່ຜ່ານການຮັບຮອງຈາກສະພາແຫ່ງຊາດເມື່ອເດືອນທັນວາປີຜ່ານມາ, ສຸມໃສ່ຄວາມສ່ຽງທີ່ເກີດຈາກ AI ໃນການສ້າງເນື້ອຫາ ເຊິ່ງກຳນົດໃຫ້ມີການກວດກາ ແລະ ຄວບຄຸມໂດຍມະນຸດ ໃນລັກສະນະຄ້າຍຄືກັນກັບກົດໝາຍ AI ທີ່ສຳຄັນຂອງສະຫະພາບເອີຣົບ.

ລັດຖະບານລະບຸໃນບົດລາຍງານເມື່ອເດືອນທັນວາວ່າ ກົດໝາຍສະບັບນີ້ ປູທາງໃຫ້ຫວຽດນາມເຊື່ອມໂຍງຢ່າງເລິກເຊິ່ງກັບມາດຕະຖານສາກົນພ້ອມທັງຮັກສາອະທິປະໄຕທາງດ້ານດິຈິຕອນ.

ກົດໝາຍ AI ຂອງຫວຽດນາມ ກຳນົດໃຫ້ບໍລິສັດຕ່າງໆຕິດປ້າຍກຳກັບເນື້ອຫາທີ່ສ້າງຂຶ້ນໂດຍ AI ຢ່າງຈະແຈ້ງ ເຊັ່ນ deepfakes ເຊິ່ງຈຳແນກໄດ້ຍາກຈາກຄວາມເປັນຈິງລວມທັງໃຫ້ບໍລິສັດເປີດເຜີຍໃຫ້ລູກຄ້າຮູ້ເມື່ອພວກເຂົາກຳລັງຕິດຕໍ່ກັບລະບົບ AI ແທນທີ່ຈະເປັນຕົວແທນທີ່ເປັນມະນຸດ; ກົດໝາຍສະບັບນີ້ ໃຊ້ໄດ້ກັບຜູ້ພັດທະນາ, ຜູ້ໃຫ້ບໍລິ ການ ແລະ ຜູ້ນຳໃຊ້ເຕັກໂນໂລຊີນີ້ ບໍ່ວ່າຈະເປັນອົງການຂອງຫວຽດນາມ ຫຼື ໜ່ວຍງານຕ່າງປະເທດທີ່ດຳເນີນງານຢູ່ໃນປະເທດກໍຕາມ.

ນາຍົກລັດຖະມົນຕີຫວຽດນາມ ຝ້າມ ມິງ ຈິ໋ງ (Phạm Minh Chính) ກ່າວໃນເວັບໄຊຂອງລັດຖະບານເມື່ອວັນພຸດທີ 25 ກຸມພາຜ່ານມາວ່າ AI ແລະ ເສດຖະກິດຂໍ້ມູນ ເປັນ "ເສົາຄ້ຳ" ຂອງຮູບແບບການພັດທະນາໃໝ່ທີ່ຍືນຍົງ ແລະ ສະຫຼາດຫຼາຍຂຶ້ນ.

ພາຍໃຕ້ກົດໝາຍສະບັບໃໝ່, ລັດຖະບານຈະສ້າງຕັ້ງສູນປະມວນຜົນ AI ແຫ່ງຊາດ, ປັບປຸງແຫຼ່ງຂໍ້ມູນ ແລະ ສ້າງຮູບແບບພາສາຂະໜາດໃຫຍ່ໃນຫວຽດນາມ.

ເຖິງແມ່ນກົດໝາຍ AI ຂອງຫວຽດນາມ ຖືເປັນບາດກ້າວທີ່ສຳຄັນດ້ານກົດລະບຽບ; ຢ່າງໃດກໍຕາມ, ນັກວິເຄາະຫຼາຍຄົນກ່າວວ່າຜົນກະທົບຂອງກົດໝາຍນີ້ ຈະຂຶ້ນກັບວ່າລັດຖະບານຮ່າໂນ້ຍຈະບັງຄັບໃຊ້ກົດໝາຍແນວໃດແລະຈະອອກຄຳແນະນຳແນວໃດສຳລັບການຈັດຕັ້ງປະຕິບັດ.

ໝາຍເຫດ: deepfake (ດີບເຟກ) ເປັນຄຳທີ່ມາຈາກພາສາອັງກິດ, ໃນພາສາລາວສາມາດແປວ່າ ວີດີໂອປອມ ຫຼື ຮູບພາບປອມແບບເລິກແລບ; ບາງຄັ້ງກໍອາດເອີ້ນວ່າ: "ການປອມແປງເຕັກນິກສູງ", "ເຕັກໂນໂລຊີຕົວປະພຶດປອມ".

ອະທິບາຍເພີ່ມຕື່ມ: deepfake ໝາຍເຖິງການໃຊ້ AI ປະມວນຮູບພາບ ຫຼື ສຽງ ໃຫ້ຄ້າຍຄືຄົນຈິງ, ເຊິ່ງອາດນຳໃຊ້ເພື່ອຈຸດປະສົງທີ່ບໍ່ດີ.

ຄຳວ່າ "deepfake" ຍັງບໍ່ມີຄຳແປທາງການໃນພາສາລາວ; ສະນັ້ນ, ສ່ວນຫຼາຍຈະໃຊ້ຄຳດັ້ງເດີມ ຫຼື ອະທິບາຍ ເປັນປະໂຫຍກ.

# ສະພາມາເລເຊຍ ບໍ່ຜ່ານຮ່າງກົດໝາຍຈຳກັດວາລະດຳລົງຕຳແໜ່ງນາຍົກລັດຖະມົນຕີໄວ້ພຽງສອງສະໄໝ



(Bloomberg) - ລັດຖະບານປະສົມຂອງມາເລເຊຍ ປະສົບຄວາມລົ້ມເຫຼວໃນການຊຸກຍູ້ຮ່າງກົດໝາຍທີ່ຈຳກັດວາລະດຳລົງຕຳ ແໜ່ງຂອງນາຍົກລັດຖະມົນຕີ ບໍ່ເກີນ 10 ປີ ຫຼື 2 ສະໄໝເຕັມ ຫຼັງຈາກບໍ່ໄດ້ຮັບສຽງສະໜັບສະໜູນຈາກສະມາຊິກສະພາຕ່ຳເຖິງສອງສ່ວນສາມ.

ວັນຈັນທີ 2 ມີນານີ້, ປະທານສະພາຕ່ຳ ໂຈຮາຣີ ອັບດຸນ (Johari Abdul) ກ່າວວ່າ ສະມາຊິກສະພາ 146 ຄົນ ສະໜັບສະໜູນຮ່າງກົດໝາຍຈຳກັດວາລະດຳລົງຕຳແໜ່ງຂອງນາຍົກລັດຖະມົນຕີ, ແຕ່ຕົວເລກນີ້ບໍ່ຮອດ 148 ສຽງ ຫຼື ສອງສ່ວນສາມຂອງສຽງສ່ວນຫຼາຍ ຈາກທັງໝົດ 222 ສຽງ ທີ່ຕ້ອງການເພື່ອປັບປຸງລັດຖະທຳມະນູນ.

ເຖິງສະມາຊິກສະພາຈາກທັງສອງຝ່າຍ ຕ່າງກໍສະໜັບສະໜູນການຈຳກັດວາລະຂອງນາຍົກລັດຖະມົນຕີໃນລະຫວ່າງການອະພິປາຍ, ແຕ່ຫຼາຍຄົນຊີ້ໃຫ້ເຫັນເຖິງບັນຫາທີ່ຍັງບໍ່ໄດ້ຮັບການແກ້ໄຂກ່ຽວກັບການຄິດໄລ່ວາລະສູງສຸດ ແລະ ການຈັດການການປ່ຽນຜ່ານ ເມື່ອນາຍົກລັດຖະມົນຕີດຳລົງຕຳແໜ່ງຄົບວາລະ.

ກ່ອນການລົງຄະແນນສຽງ, ນາຍົກລັດຖະມົນຕີອັນວາ ອິບຣາຮິມ (Anwar Ibrahim) ຜູ້ນຳມາເລເຊຍ ກ່າວວ່າ ການຈຳກັດວາ ລະຕາມທີ່ສະເໜີ ບໍ່ແມ່ນການປະຕິເສດໂອກາດຂອງການເປັນຜູ້ນຳ, ແຕ່ເປັນຄວາມພະຍາຍາມທີ່ຈະຮັບປະກັນວ່າປະເທດຍັງຄົງໄດ້ຮັບການຊີ້ນຳໂດຍສະຖາບັນທີ່ເຮັດວຽກໄດ້ຢ່າງມີປະສິດທິພາບ ແລະ ບໍ່ຜູກມັດກັບບຸກຄົນໃດບຸກຄົນໜຶ່ງ.

ອັນວາ ປະກາດເມື່ອເດືອນມັງກອນຜ່ານມາວ່າ ເຂົາຈະຊຸກຍູ້ການຈຳກັດວາລະດຳລົງຕຳແໜ່ງຂອງນາຍົກລັດຖະມົນຕີ ບໍ່ເກີນສອງສະໄໝ ທ່າມກາງການຮຽກຮ້ອງໃຫ້ມີການແກ້ໄຂບັນຫາສໍ້ລາດບັງຫຼວງ ແລະ ປັບປຸງການບໍລິຫານຄຸ້ມຄອງປະເທດ ໂດຍເຂົາກ່າວອີກໃນເດືອນຜ່ານມາວ່າ ໄລຍະເວລາ 10 ປີ ແມ່ນ "ພຽງພໍແລ້ວ" ສຳລັບຜູ້ດຳລົງຕຳແໜ່ງນາຍົກລັດຖະມົນຕີໃນການປະຕິບັດໜ້າທີ່ໄດ້ຢ່າງມີປະສິດທິພາບ.

# Finland ກຽມປັບປຸງກົດໝາຍເພື່ອອະນຸຍາດໃຫ້ໃຊ້ອຸປະກອນນິວເຄລຍເພື່ອການປ້ອງກັນປະເທດ



(Xinhua) - ແຟງລັງ ຈະພະຍາຍາມປັບປຸງກົດໝາຍພະລັງງານນິວເຄລຍ ແລະ ປະມວນກົດໝາຍອາຍາ ເພື່ອຍົກເລີກການຫ້າມນຳເຂົ້າ ແລະ ຈັດການອຸປະກອນນິວເຄລຍພາຍໃນປະເທດຢ່າງສິ້ນເຊີງ ເຊິ່ງກະຊວງປ້ອງກັນປະເທດກ່າວເມື່ອວັນພະຫັດທີ 5 ມີນາວ່າ ມີຈຸດປະສົງເພື່ອເຮັດໃຫ້ກົດໝາຍຂອງແຟງລັງ ສອດຄ່ອງກັບການສະກັດກັ້ນແລະການປ້ອງກັນຂອງອົງການສົນທິສັນຍາອັດລັງຕິກເໜືອ ຫຼື ນາໂຕ (North AtlanticTreatyOrganization-NATO);ກະຊວງກ່າວວ່າ:ຮ່າງຂໍ້ສະເໜີນີ້ ຈະອະນຸຍາດໃຫ້ມີການນຳເຂົ້າອຸປະກອນນິວເຄລຍເຂົ້າມາແຟງລັງ ຫຼື ການຂົນສົ່ງ, ສະໜອງ ຫຼື ຄອບຄອງອຸປະກອນນິວເຄລຍໃນແຟງລັງ ໃນສະພາບການຂອງການປ້ອງກັນປະເທດຂອງແຟງລັງ, ການປ້ອງກັນຮ່ວມກັນຂອງນາໂຕ ຫຼື ການຮ່ວມມືດ້ານການປ້ອງກັນປະເທດ.

ກົດໝາຍປັດຈຸບັນຫ້າມການນຳເຂົ້າອຸປະກອນນິວເຄລຍເຂົ້າມາແຟງລັງໂດຍບໍ່ມີຂໍ້ຍົກເວັ້ນ ລວມທັງການຂົນສົ່ງ, ສະໜອງ ແລະ ຄອບຄອງອຸປະກອນນິວເຄລຍພາຍໃນປະເທດ.

ກະຊວງປ້ອງກັນປະເທດກ່າວວ່າ "ເປົ້າໝາຍແມ່ນເພື່ອກຳຈັດອຸປະສັກທາງກົດໝາຍ ເພື່ອໃຫ້ແຟງລັງສາມາດປ້ອງກັນປະເທດໃນຖານະເປັນສ່ວນໜຶ່ງຂອງພັນທະມິດ ແລະ ໃຊ້ປະໂຫຍດຈາກການສະກັດກັ້ນແລະການປ້ອງກັນຂອງນາໂຕໄດ້ຢ່າງເຕັມທີ່" ໂດຍກ່າວຕື່ມວ່າ ການປ່ຽນແປງນີ້ມີຈຸດປະສົງ "ເພື່ອເພີ່ມຄວາມໝັ້ນຄົງຂອງແຟງລັງໃຫ້ສູງສຸດ ໃນສະພາບແວດລ້ອມການປະຕິບັດງານທີ່ຄາດເດົາບໍ່ໄດ້"ແລະເພື່ອຮັກສາລະດັບການໃຊ້ປະຕິບັດການທາງທະຫານຕໍ່ແຟງລັງ ແລະ ພັນທະມິດ "ໃຫ້ສູງທີ່ສຸດເທົ່າທີ່ຈະເປັນໄປໄດ້"; ກະຊວງລະບຸວ່າການປັບປຸງກົດໝາຍທີ່ສະເໜີນີ້ ບໍ່ໄດ້ໝາຍຄວາມວ່າແຟງລັງຈະພະຍາຍາມຄອບຄອງອາວຸດນິວເຄລຍໃນດິນແດນຂອງຕົນ.

ແຟງລັງ ບໍ່ໄດ້ຕ້ອງການຄອບຄອງອາວຸດນິວເຄລຍໃນດິນແດນຂອງຕົນ ແລະ ນາໂຕກໍບໍ່ມີແຜນທີ່ຈະເຮັດແນວນັ້ນ, ກະຊວງກ່າວ ທັງເສີມວ່າ ການປັບປຸງກົດໝາຍຄັ້ງນີ້ ຈະບໍ່ສົ່ງຜົນກະທົບຕໍ່ການເຝິກຊ້ອມນິວເຄລຍຂອງນາໂຕ ເນື່ອງຈາກບໍ່ມີການເຄື່ອນຍ້າຍອາວຸດນິວເຄລຍໃນລະຫວ່າງການເຝິກຊ້ອມດັ່ງກ່າວໃນປັດຈຸບັນ ຫຼື ໃນອະນາຄົດ; ກະຊວງກ່າວວ່າ ການປັບປຸງຈະເຮັດໃຫ້ກົດໝາຍຂອງແຟງລັງສອດຄ່ອງກັບໜ້າທີ່ຂອງນາໂຕ ແລະ ຈະບໍ່ຂັດກັບພັນທະສາກົນຂອງແຟງລັງ.

ໄລຍະເວລາການຮັບຟັງຄວາມຄິດເຫັນຂອງປະຊາຊົນຈະສິ້ນສຸດລົງໃນວັນທີ 2 ເມສານີ້ ແລະ ກະຊວງກ່າວວ່າ ເປົ້າໝາຍແມ່ນເພື່ອໃຫ້ການປັບປຸງກົດໝາຍຄັ້ງນີ້ ມີຜົນບັງຄັບໃຊ້ໂດຍໄວທີ່ສຸດ.

# ລັດຖະສະພາ Somalia ອະນຸມັດລັດຖະທຳມະນູນສະບັບໃໝ່



(Xinhua) - ວັນພຸດທີ 4 ມີນານີ້, ລັດຖະສະພາ ແຫ່ງສາທາລະນະລັດ ສະຫະພັນ ໂຊມາລີ ໄດ້ອະນຸມັດລັດຖະທຳມະນູນສະບັບໃໝ່ ຫຼັງຈາກຂະບວນການທີ່ຍືດເຍື້ອມາເປັນເວລາຫຼາຍກວ່າ 13 ປີ.

ເຊກ ອາເດນ ໂມຮາເມັດນູຣ໌ (Sheikh Aden Mohamed Nur) ປະທານສະພາປະຊາຊົນ (ສະພາຕ່ຳ)ຂອງລັດຖະສະພາສະຫະພັນ ປະກາດວ່າ ສະມາຊິກສະພາຕ່ຳ 186 ຄົນ (ທັງໝົດ 275 ທີ່ນັ່ງ) ແລະ ສະມາຊິກສະພາສູງ 37 ຄົນ (ທັງໝົດ 54 ທີ່ນັ່ງ) ໄດ້ລົງຄະແນນສຽງເຫັນດີລັດຖະທຳມະນູນສະບັບໃໝ່ໃນກອງປະຊຸມຮ່ວມ. ນູຣ໌ ກ່າວວ່າ "ວັນນີ້ ແມ່ນວັນປະຫວັດສາດທີ່ຄວນຄ່າແກ່ຈົດຈຳ ເນື່ອງຈາກລັດຖະທຳມະນູນຂອງພວກເຮົາປ່ຽນຈາກສະບັບຊົ່ວຄາວໄປເປັນສະບັບທີ່ເປັນທາງການ ແລະ ຖືກຕ້ອງຕາມກົດໝາຍ".

ລັດຖະທຳມະນູນສະບັບໃໝ່ ຈະໄດ້ຮັບການລົງນາມຢ່າງເປັນທາງການໂດຍປະທານາທິບໍດີ ຮັສຊັນ ເຊກ ໂມຮາມູດ (HassanSheikhMohamud) ເຊິ່ງຈະມາແທນທີ່ລັດຖະທຳມະນູນຊົ່ວຄາວທີ່ໄດ້ປະກາດໃຊ້ໃນປີ 2012 ທີ່ມີຜູ້ແທນຫຼາຍກວ່າ 800 ຄົນ ລົງມະຕິຮັບຮອງໃນກອງປະຊຸມທີ່ນະຄອນຫຼວງໂມກາດິຊູ (Mogadishu) ຂະນະທີ່ປະເທດຢູ່ພາຍໃຕ້ລັດຖະບານຊົ່ວຄາວ.

"ວັນນີ້ ຖືເປັນບາດກ້າວສຳຄັນສຳລັບໂຊມາລີ ເນື່ອງຈາກເຮົາໄດ້ປະຕິບັດຕາມພັນທະທາງລັດຖະທຳມະນູນ ໃນການຮ່າງ ແລະ ປະກາດໃຊ້ລັດຖະທຳມະນູນສະບັບໃໝ່ ໂດຍປ່ຽນສະຖານະຈາກກົດໝາຍຊົ່ວຄາວເປັນກົດໝາຍສູງສຸດຂອງປະເທດ" ຄາດິຈາ ໂມຮາເມັດ ອັລ-ມັກຊູມີ (Khadija Mohamed Al-Makhzoumi) ສະມາຊິກລັດຖະສະພາ ແລະ ລັດຖະມົນຕີກະຊວງກິດຈະການຄອບຄົວ ແລະ ສິດທິມະນຸດກ່າວ.

ລັດຖະທຳມະນູນສະບັບໃໝ່ ຂະຫຍາຍວາລະການດຳລົງຕຳແໜ່ງປະທານາທິບໍດີ ຈາກສີ່ປີເປັນຫ້າປີ; ນອກຈາກນີ້, ຍັງກຳນົດວ່າ ປະທານາທິບໍດີ ຈະໄດ້ຮັບການເລືອກຕັ້ງໂດຍລັດຖະສະພາ, ໃນຂະນະທີ່ສະມາຊິກລັດຖະສະພາ ຈະໄດ້ຮັບການເລືອກຕັ້ງໂດຍກົງຈາກປະຊາຊົນ. ພາຍໃຕ້ລັດຖະທຳມະນູນສະບັບໃໝ່, ນາຍົກລັດຖະມົນຕີ ໄດ້ຮັບການແຕ່ງຕັ້ງໂດຍປະທານາທິບໍດີ ແຕ່ສາມາດຖືກປົດອອກຈາກຕຳແໜ່ງໂດຍລັດຖະສະພາໄດ້.

ລັດຖະທຳມະນູນໄດ້ກຳນົດບົດບາດຂອງອົງການບໍລິຫານ, ອົງການນິຕິບັນຍັດ ແລະ ອົງການຕຸລາການ, ແລະສ້າງກົນໄກການຕິດຕາມກວດກາທີ່ຖືກອອກແບບມາເພື່ອປ້ອງກັນການໃຊ້ອຳນາດໃນທາງທີ່ຜິດ, ຮັບປະກັນຄວາມໂປ່ງໃສ ແລະ ຍຶດໝັ້ນໃນກົດໝາຍ.

ຮັສຊັນ ໂມອັລລິນ ໂມຮາມູດ ເຊກ ອາລີ (Hassan MoallinMohamudSheikh Ali) ລັດຖະມົນຕີກະຊວງຍຸຕິທຳ ແລະ ກິດຈະການລັດຖະທຳມະນູນ ໄດ້ຍ້ອງຍໍລັດຖະທຳມະນູນສະບັບໃໝ່ໂດຍກ່າວວ່າການອະນຸມັດຈາກລັດຖະສະພາ ແມ່ນບາດກ້າວສຳຄັນທາງປະຫວັດສາດໃນການເດີນທາງຂອງປະເທດໄປສູ່ສະຖຽນລະພາບ,ການປົກຄອງທີ່ດີ ແລະ ຄວາມເປັນເອກະພາບແຫ່ງຊາດ. "ລັດຖະທຳມະນູນສະບັບນີ້ ບໍ່ໄດ້ເກີດຂຶ້ນໂດຍງ່າຍ, ມັນຕ້ອງໃຊ້ເວລາ, ຊັບພະຍາກອນ ແລະ ຄຳໝັ້ນສັນຍາທີ່ໜັກແໜ້ນຈາກທຸກຝ່າຍທີ່ກ່ຽວຂ້ອງ ເພື່ອຮ່າງເອກະສານທີ່ສະທ້ອນເຖິງຄວາມມຸ່ງມາດປາຖະໜາຂອງປະຊາຊົນຊາວໂຊມາລີ; ວັນນີ້, ເຮົາໄດ້ວາງພື້ນຖານສຳລັບໂຊມາລີທີ່ຍຸຕິທຳ, ປອດໄພ ແລະ ຈະເລີນຮຸ່ງເຮືອງ" ໂມອັລລິນ ກ່າວໃນຖະແຫຼງການ. ເຂົາກ່າວຕື່ມວ່າ ການອະນຸມັດລັດຖະທຳມະນູນສະບັບປັບປຸງ ຖືເປັນຄວາມກ້າວໜ້າທີ່ສຳຄັນໃນການເສີມສ້າງສະຖາບັນປະຊາທິປະໄຕ, ເຮັດໃຫ້ລະບົບສະຫະພັນຂອງໂຊມາລີຊັດເຈນຂຶ້ນ ແລະ ນຳພາປະເທດອອກຈາກຂອບລັດຖະທຳມະນູນຊົ່ວຄາວທີ່ມີມາດົນນານ.

ຜູ້ຊ່ຽວຊານກ່າວວ່າເອກະສານດັ່ງກ່າວ ເຊິ່ງຂະນະນີ້ພ້ອມແລ້ວສຳລັບການບັງຄັບໃຊ້, ຖືເປັນຫົວໃຈສຳຄັນໃນການຟື້ນຟູກົດໝາຍແລະຄວາມເປັນລະບຽບຮຽບຮ້ອຍ ຫຼັງຈາກຄວາມວຸ້ນວາຍທາງການເມືອງ ແລະ ຄວາມຂັດແຍ້ງຍາວນານຫຼາຍທົດສະວັດ.

# ລັດ Victoria ກຽມໃຊ້ກົດໝາຍ "WorkFromHome"



(BLOOMBERG) - ລັດວິກຕໍເຣຍຂອງອົດສະຕຣາລີ ກຽມອະນຸຍາດໃຫ້ປະຊາຊົນເຮັດວຽກຢູ່ເຮືອນໄດ້ສອງວັນຕໍ່ອາທິດຢ່າງຖືກກົດໝາຍ.

ວັນທີ 4 ມີນານີ້, ຈາຊິນຕາ ອັລລັນ (Jacinta Allan) ນາຍົກລັດຖະມົນຕີລັດວິກຕໍເຣຍ ກ່າວໃນຖະແຫຼງການວ່າ ກົດໝາຍດັ່ງກ່າວຈະມີຜົນບັງຄັບໃຊ້ໃນວັນທີ 1 ກັນຍາ 2026 ໂດຍຈະຖືກບັນຍັດໄວ້ໃນກົດໝາຍໂອກາດທີ່ເທົ່າທຽມກັນ (Equal Opportunity Act) ແລະເຮັດໃຫ້ວິກຕໍເຣຍ ເປັນລັດທຳອິດໃນອົດສະຕຣາລີ ທີ່ຮັບຮູ້ສິດການເຮັດວຽກທາງໄກ;ນາງກ່າວຕື່ມວ່າ "ການເຮັດວຽກຢູ່ເຮືອນເປັນເລື່ອງດີສຳລັບຄອບຄົວເພາະມັນຊ່ວຍປະຢັດເວລາ ແລະເງິນ ແລະ ສົ່ງຜົນໃຫ້ພໍ່ແມ່ໄດ້ເຮັດວຽກຫຼາຍຂຶ້ນ".

ນະໂຍບາຍດັ່ງກ່າວຈະນຳໃຊ້ກັບທຸກສະຖານທີ່ເຮັດວຽກ, ແຕ່ທຸລະກິດທີ່ມີພະນັກງານໜ້ອຍກວ່າ 15 ຄົນ ຈະເລີ່ມປະຕິບັດຕາມໃນວັນທີ 1 ກໍລະກົດ 2027 ເພື່ອໃຫ້ມີເວລາກະກຽມຄວາມພ້ອມສຳລັບການປ່ຽນແປງ; ຢ່າງໃດກໍຕາມ, ນະໂຍບາຍ ໃໝ່ນີ້ໄດ້ຮັບການວິພາກວິຈານຈາກກຸ່ມທຸລະກິດ ເນື່ອງຈາກມີຄວາມກັງວົນວ່າກົດໝາຍສະບັບນີ້ ຈະເປັນອຸປະສັກຕໍ່ການລົງທຶນໃນເສດຖະກິດຂອງລັດວິກຕໍເຣຍ ຫຼັງຈາກເມືອງເມລເບີນ (Melbourne) ເຊິ່ງເປັນເມືອງຫຼວງຂອງລັດ ປະເຊີນກັບການປິດລ້ອມ(lockdowns) ເປັນເວລາຍາວນານທີ່ສຸດໃນໂລກໃນລະຫວ່າງການລະບາດຂອງພະຍາດCOVID-19ແລະການຟື້ນຕົວເປັນໄປຢ່າງຊ້າໆ.

ຂະນະດຽວກັນ,ແບຣນ ແບລ໊ກ(Bran Black)ຫົວໜ້າຄະນະຜູ້ບໍລິຫານ (ຊີອີໂອ) ຂອງສະພາທຸລະກິດແຫ່ງອົດສະຕຣາລີ ກ່າວວ່າ: ນະໂຍບາຍຂອງລັດຖະບານທີ່ໃຊ້ໄດ້ກັບທຸກສະຖານະການ ເປັນແນວທາງທີ່ຜິດ, ເນື່ອງຈາກຂໍ້ສະເໜີດັ່ງກ່າວ ບໍ່ໄດ້ແກ້ໄຂບັນຫາທີ່ເກີດຂຶ້ນຈິງ ບໍ່ວ່າຈະເປັນການເຕີບໂຕຂອງຜະລິດຕະພາບທີ່ອ່ອນແອ, ອັດຕາເງິນເຟີ້ທີ່ສູງຂຶ້ນ ແລະ ມາດຕະຖານການດຳລົງຊີວິດພາຍໃຕ້ຄວາມກົດດັນ.

# ຄະນະກຳມະການເລືອກຕັ້ງໄທ ຮັບຮອງຜົນການເລືອກຕັ້ງ




(Xinhua) - ວັນທີ 4 ມີນານີ້, ຄະນະກຳມະການເລືອກຕັ້ງຂອງປະເທດໄທ ໄດ້ຮັບຮອງຜົນການເລືອກຕັ້ງທົ່ວໄປໃນເດືອນກຸມພາຢ່າງເປັນທາງການ ໂດຍຮັບຮອງ 499 ທີ່ນັ່ງໃນສະພາຜູ້ແທນລາດສະດອນ ເຊິ່ງເປັນການປູທາງໃຫ້ສະພາຊຸດໃໝ່ເປີດປະຊຸມ.

ພາສະກອນ ສິຣິພະຄະຍາພອນ (Phasakorn Siriphakayaporn) ຮອງເລຂາທິການຄະນະກຳມະການເລືອກຕັ້ງ ກ່າວວ່າ: ຄະນະກຳມະການມີມະຕິຮັບຮອງສະມາຊິກສະພາຜູ້ແທນລາດສະດອນແບບບັນຊີລາຍຊື່ທັງໝົດ 100 ຄົນ ແລະ ແບບເຂດເລືອກຕັ້ງ ອີກ 3 ຄົນ.

ການປະກາດດັ່ງກ່າວ ມີຂຶ້ນຫຼັງຈາກຄະນະກຳມະການຮັບຮອງຜົນການເລືອກຕັ້ງແບບເຂດເລືອກຕັ້ງ 396 ທີ່ນັ່ງ ຈາກທັງໝົດ 500 ທີ່ນັ່ງໃນສະພາຜູ້ແທນລາດສະດອນ ເມື່ອໜຶ່ງອາທິດກ່ອນໜ້ານີ້.

ຜົນການເລືອກຕັ້ງທີ່ໄດ້ຮັບການຮັບຮອງສະແດງໃຫ້ເຫັນວ່າ ພັກພູມໃຈໄທຂອງນາຍົກລັດຖະມົນຕີອະນຸທິນຊານວິຣະກຸນ (Anutin Charnvirakul) ໄດ້ຮັບທີ່ນັ່ງຫຼາຍທີ່ສຸດ (192), ຮອງລົງມາແມ່ນພັກປະຊາຊົນ (120), ພັກເພື່ອໄທ (74), ພັກກ້າທຳ (58) ແລະ ພັກປະຊາທິປັດ (21).

ພາສະກອນ ກ່າວໃນການຖະແຫຼງຂ່າວວ່າ ມີຜູ້ມາໃຊ້ສິດເລືອກຕັ້ງ ຈຳນວນ 37.8 ລ້ານຄົນ ເຊິ່ງກວມເອົາປະມານ 71% ຂອງຜູ້ມີສິດເລືອກຕັ້ງທັງໝົດໃນປະເທດໄທ.

# ຍີ່ປຸ່ນ ອະນຸມັດຮ່າງກົດໝາຍ ເພື່ອ ສ້າງຕັ້ງອົງການຄຸ້ມຄອງໄພພິບັດ



(Xinhua) - ວັນສຸກທີ 6 ມີນານີ້, ລັດຖະບານຍີ່ປຸ່ນ ອະນຸມັດຮ່າງກົດໝາຍເພື່ອສ້າງຕັ້ງອົງການລັດຖະບານໃໝ່ ເພື່ອນຳພາໃນການຕອບສະໜອງ, ການຟື້ນຟູ ແລະ ການກໍ່ສ້າງຄືນໃໝ່ພາຍຫຼັງໄພພິບັດ; ພະແນກຄຸ້ມຄອງໄພພິບັດໃນປັດຈຸບັນຂອງຫ້ອງວ່າການຄະນະລັດຖະມົນຕີຈະຖືກຈັດຕັ້ງຂຶ້ນໃໝ່ເປັນອົງການໃໝ່ນີ້ ເຊິ່ງຈະມີບຸກຄະລາກອນ352ຄົນເພີ່ມຂຶ້ນຈາກ 220 ຄົນ ພ້ອມກັບງົບປະມານທີ່ເພີ່ມຂຶ້ນ.

ອົງການຄຸ້ມຄອງໄພພິບັດ ພາຍໃຕ້ການນຳພາຂອງນາຍົກລັດຖະມົນຕີ ຈະມີລັດຖະມົນຕີປະຈຳການ ແລະ ຄາດວ່າຈະມີການເປີດສຳນັກງານພາກພື້ນໃນປີງົບປະມານ 2027 ຫຼື ຫຼັງຈາກນັ້ນ.

ຫຼັງຈາກການເປີດຕົວທີ່ຄາດວ່າຈະເກີດຂຶ້ນໃນລະດູໃບໄມ້ຫຼົ່ນປີນີ້, ອົງການດັ່ງກ່າວຈະຮັບຜິດຊອບໃນການຮ່າງນະໂຍບາຍ ແລະ ແຜນການພື້ນຖານທີ່ກ່ຽວຂ້ອງກັບໄພພິບັດ ພ້ອມທັງປະສານງານການຕອບສະໜອງຕໍ່ໄພພິບັດຂະໜາດໃຫຍ່; ນອກຈາກນີ້, ຍັງມີສິດອຳນາດໃນການອອກຄຳແນະນຳໄປຍັງອົງການລັດຖະບານອື່ນໆ.

ຄະນະລັດຖະມົນຕີ ໄດ້ອະນຸມັດຮ່າງກົດໝາຍທີ່ກ່ຽວຂ້ອງຫຼາຍສະບັບໃນວັນດຽວກັນ ລວມທັງຮ່າງກົດໝາຍພື້ນຖານວ່າດ້ວຍການຄຸ້ມຄອງໄພພິບັດສະບັບປັບປຸງ ເຊິ່ງສຸມໃສ່ການສ້າງເງື່ອນໄຂການດຳລົງຊີວິດທີ່ດີຂຶ້ນສຳລັບຜູ້ທີ່ໄດ້ຮັບຜົນກະທົບຈາກໄພພິບັດ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ
ຄະນະປະຈຳ

ເລກທີ 30 / ຄປຈ
ນະຄອນຫຼວງວຽງຈັນ, ວັນທີ 13 / 03 / 26

## ມະຕິ
### ວ່າດ້ວຍການດຳເນີນກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາແຫ່ງຊາດ ຊຸດທີ X

- ອີງຕາມ ມາດຕາ 54 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບປັບປຸງປີ 2024 ກ່ຽວກັບການດຳເນີນກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ;
- ອີງຕາມ ແຜນການກະກຽມ ແລະ ດຳເນີນກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາແຫ່ງຊາດ ຊຸດທີ X ສະບັບເລກທີ 25/ຄປຈ, ລົງວັນທີ 3 ມີນາ 2026.

ເພື່ອຮັບປະກັນການດຳເນີນກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາແຫ່ງຊາດ ຊຸດທີ X ບັນລຸຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້

**ຄະນະປະຈຳສະພາແຫ່ງຊາດ ຕົກລົງ:**

**ມາດຕາ 1** ເຫັນດີໃຫ້ດຳເນີນກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາແຫ່ງຊາດ ຊຸດທີ X ເລີ່ມແຕ່ວັນທີ 23 ຫາ 27 ມີນາ 2026 ລວມ 5 ວັນ, ຢູ່ທີ່ສະພາແຫ່ງຊາດ ຫ້ອງ 2 ທັນວາ (ເບີ 202), ນະຄອນຫຼວງວຽງຈັນ.

**ມາດຕາ 2** ຄະນະປະຈຳສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ, ກົງຈັກການຈັດຕັ້ງພາຍໃນສະພາແຫ່ງຊາດ, ບັນດາພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 3** ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ບ່ອນສົ່ງ:**

| | |
|---|---|
| - ບັນດາທ່ານ ສະມາຊິກສະພາແຫ່ງຊາດ | 1 ສະບັບ; |
| - ບັນດາທ່ານ ຄະນະປະຈຳສະພາແຫ່ງຊາດ | 1 ສະບັບ; |
| - ຫ້ອງວ່າການສູນກາງພັກ | 1 ສະບັບ; |
| - ຫ້ອງວ່າການສຳນັກງານປະທານປະເທດ | 1 ສະບັບ; |
| - ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ | 1 ສະບັບ; |
| - ສານປະຊາຊົນສູງສຸດ | 1 ສະບັບ; |
| - ອົງການໄອຍະການປະຊາຊົນສູງສຸດ | 1 ສະບັບ; |
| - ອົງການກວດກາແຫ່ງລັດ | 1 ສະບັບ; |
| - ອົງການກວດສອບແຫ່ງລັດ | 1 ສະບັບ; |
| - ບັນດາກົງຈັກການຈັດຕັ້ງພາຍໃນສະພາແຫ່ງຊາດ | 1 ສະບັບ. |

**ຄະນະປະຈຳສະພາແຫ່ງຊາດ**
**ປະທານ**

**ປອ ໄຊສົມພອນ ພົມວິຫານ**

# Morocco ກຳນົດວັນທີ 23 ກັນຍາ ເປັນວັນເລືອກຕັ້ງ



(Xinhua) - ລັດຖະບານແຫ່ງ ລາຊະອານາຈັກມາຣົກ ໄດ້ກຳນົດວັນທີ 23 ກັນຍາ 2026 ເປັນວັນເລືອກຕັ້ງຄັ້ງຕໍ່ໄປຂອງປະເທດ ສຳລັບສະພາຜູ້ແທນລາດສະດອນທີ່ມີ 395 ທີ່ນັ່ງເຊິ່ງເປັນສະພາຕ່ຳຂອງລັດຖະສະພາ.

ມຸສຕາຟາ ໄບຕັສ (Mustapha Baitas) ໂຄສົກລັດຖະບານ ກ່າວກັບສື່ມວນຊົນຫຼັງຈາກກອງປະຊຸມຄະນະລັດຖະມົນຕີເມື່ອວັນພະຫັດທີ 5 ມີນາ ວ່າ ຄະນະລັດຖະມົນຕີໄດ້ອະນຸມັດຮ່າງພະລາຊະກິດດີກາທີ່ກຳນົດວັນເລືອກຕັ້ງແລ້ວ, ຮ່າງດັ່ງກ່າວຍັງກຳນົດເວລາສຳລັບການຍື່ນໃບສະໝັກຜ່ານເອທີເອເລັກໂຕຣນິກສະເພາະແລະໄລຍະເວລາການໂຄສະນາຫາສຽງອີກດ້ວຍ.

ພາຍໃຕ້ລັດຖະທຳມະນູນຂອງປະເທດ, ກະສັດຂອງມາຣົກ ເປັນຜູ້ແຕ່ງຕັ້ງນາຍົກລັດຖະມົນຕີຈາກພັກທີ່ໄດ້ຮັບທີ່ນັ່ງຫຼາຍທີ່ສຸດ ເຊິ່ງຫຼັງຈາກນັ້ນຈະດຳເນີນການສ້າງຕັ້ງລັດຖະບານຕໍ່ໄປ.

# ສິ່ງທີ່ຄວນຮູ້ກ່ຽວກັບຂະບວນການຄັດເລືອກຜູ້ນໍາສູງສຸດຂອງອີຣານ

**ໂດຍ: ວິລະພັດ ພາບວິໄຊ**
**ແປ ແລະ ຮຽບຮຽງຈາກເວັບໄຊຂ່າວຕ່າງປະເທດຂອງຊິນຮວາ**

ຫຼັງຈາກການເສຍຊີວິດຂອງ ອາລີ ຄາເມເນອີ (Ali Khamenei) ຈາກການໂຈມຕີທາງອາກາດຂອງສະຫະລັດອາເມລິກາ ແລະ ອິດສະຣາແອນ ເມື່ອວັນເສົາທີ 28 ກຸມພາຜ່ານມາ.

ເຊເຢດ ອາມັດ ຄາຕາມີ (Seyed Ahmad Khatami) ນັກບວດອາວຸໂສ ແລະ ສະມາຊິກສະພາຜູ້ຊ່ຽວຊານຂອງອີຣານ ກ່າວເມື່ອວັນພຸດທີ 4 ມີນາວ່າ ປະເທດຈະຄັດເລືອກຜູ້ນໍາສູງສຸດຄົນຕໍ່ໄປໃນໄວໆນີ້ ໂດຍມີຜູ້ສະໝັກທີ່ໄດ້ຮັບການຄັດເລືອກແລ້ວ.

ຕໍ່ໄປນີ້ແມ່ນພາບລວມໂດຍຫຍໍ້ຂອງກົນໄກຕາມລັດຖະທໍາມະນູນ ທີ່ຈະກໍານົດຜູ້ນໍາສູງສຸດຄົນຕໍ່ໄປຂອງອີຣານ:

- ສະພາຜູ້ຊ່ຽວຊານ (Assembly of Experts)

ນີ້ແມ່ນອົງການຂອງນັກບວດທີ່ໄດ້ຮັບການເລືອກຕັ້ງ ເຊິ່ງຮັບຜິດຊອບໃນການຄັດເລືອກຜູ້ນໍາສູງສຸດ, ປະກອບດ້ວຍສະມາຊິກ 88 ຄົນ ທີ່ໄດ້ຮັບການເລືອກຕັ້ງໂດຍປະຊາຊົນຊາວອີຣານທຸກໆແປດປີ; ສະມາຊິກຂອງສະພາ ຕ້ອງມີຄຸນສົມບັດ ຫຼື ມາດຕະຖານ ສູງ ແລະ ມີຄວາມຮູ້ໃນກົດໝາຍອິດສະລາມ ແລະ ຄວາມເປັນຜູ້ນໍາ. ພາຍໃຕ້ລັດຖະທໍາມະນູນຂອງອີຣານ, ສະພາມີອໍານາດໃນການເລືອກຕັ້ງ ຫຼື ປົດຕໍາແໜ່ງຜູ້ນໍາສູງສຸດ.

- ຄຸນສົມບັດ

ຜູ້ທີ່ຈະດໍາລົງຕໍາແໜ່ງຜູ້ນໍາສູງສຸດໄດ້ນັ້ນ ຕ້ອງເປັນບຸກຄົນສໍາຄັນທາງສາສະໜາທີ່ມີຄວາມຊ່ຽວຊານຢ່າງເລິກເຊິ່ງໃນດ້ານນິຕິສາດອິດສະລາມ, ຈັນຍາບັນ ແລະ ການເມືອງ; ນອກຈາກນັ້ນ, ຜູ້ນໍາຈະຕ້ອງມີອໍານາດທາງການເມືອງແລະສາມາດຮັກສາຄວາມຕໍ່ເນື່ອງທາງອຸດົມການຂອງລະບົບ. ໃນກໍລະນີທີ່ບຸກຄົນຫຼາຍຄົນທີ່ມີຄຸນສົມບັດ ແລະ ເງື່ອນໄຂຄົບຖ້ວນ, ບຸກຄົນທີ່ມີຄວາມຮູ້ຄວາມເຂົ້າໃຈໃນດ້ານນິຕິສາດ ແລະ ການເມືອງທີ່ດີກວ່າ ຈະໄດ້ຮັບການພິຈາລະນາເປັນພິເສດ.

-ຂະບວນການຄັດເລືອກ

ໃນກໍລະນີທີ່ຜູ້ນໍາສູງສຸດຄົນປັດຈຸບັນ ເສຍຊີວິດ ຫຼື ໄຮ້ຄວາມສາມາດ, ສະພາຜູ້ຊ່ຽວຊານ ຈະປະຊຸມເພື່ອຄັດເລືອກຜູ້ນໍາສູງສຸດຄົນໃໝ່ ໂດຍຈະພິຈາລະນາຜູ້ສະໝັກຫຼາຍຄົນ ແລະ ເລືອກຜູ້ທີ່ມີຄຸນສົມບັດເໝາະສົມທີ່ຈະນໍາພາປະເທດທັງໃນດ້ານຈິດວິນຍານ ແລະ ການເມືອງ.




-ສະພາລັດຖະທໍາມະນູນ (Constitutional Council)

ສະພາລັດຖະທໍາມະນູນມີບົດບາດສໍາຄັນໃນການກວດສອບຄຸນສົມບັດຂອງຜູ້ສະໝັກເພື່ອຮັບປະກັນວ່າກົງຕາມຂໍ້ກໍານົດຂອງລັດຖະທໍາມະນູນ ແລະ ຫຼັກການຂອງສາທາລະນະລັດອິດສະລາມ; ສະພາຍັງມີໜ້າທີ່ຕິດຕາມກວດກາການເລືອກຕັ້ງສະພາຜູ້ຊ່ຽວຊານ, ປະທານາທິບໍດີ ແລະ ສະພາທີ່ປຶກສາອິດສະລາມ (Islamic Consultative Assembly) ຫຼື ລັດຖະສະພາ ເຊິ່ງເປັນອົງການນິຕິບັນຍັດທີ່ມີສະມາຊິກ 290 ຄົນ.

- ສະພາຜູ້ນໍາ (Leadership Council)

ໃນກໍລະນີທີ່ຜູ້ນໍາສູງສຸດເສຍຊີວິດ, ລາອອກ ຫຼື ຖືກປົດຕໍາແໜ່ງ, ຜູ້ຊ່ຽວຊານຈະດໍາເນີນການພາຍໃນເວລາອັນສັ້ນທີ່ສຸດ ເພື່ອແຕ່ງຕັ້ງຜູ້ນໍາຄົນໃໝ່; ຈົນກວ່າຈະມີການແຕ່ງຕັ້ງຜູ້ນໍາຄົນໃໝ່, ສະພາທີ່ປະກອບດ້ວຍປະທານາທິບໍດີ, ຫົວໜ້າຝ່າຍຕຸລາການ ແລະ ຜູ້ທີ່ມີຄຸນວຸດທິທາງສາສະໜາຈາກສະພາລັດຖະທໍາມະນູນ ຈະເຂົ້າຮັບໜ້າທີ່ແທນຜູ້ນໍາເປັນການຊົ່ວຄາວ.

- ອໍານາດຂອງຜູ້ນໍາສູງສຸດ

ເມື່ອໄດ້ຮັບການເລືອກຕັ້ງແລ້ວ, ຜູ້ນໍາສູງສຸດຈະມີອໍານາດເໜືອທຸກຝ່າຍຂອງລັດຖະບານ, ບັນຊາການກອງທັບແລະມີອິດທິພົນຢ່າງຫຼວງຫຼາຍຕໍ່ນະໂຍບາຍການຕ່າງປະເທດ; ຜູ້ນໍາຍັງມີອໍານາດປົດປະທານາທິບໍດີອອກ ຖ້າສານສູງສຸດພົບວ່າເຂົາມີຄວາມຜິດໃນການລະເມີດໜ້າທີ່ຕາມລັດຖະທໍາມະນູນ ຫຼື ຖ້າສະພາທີ່ປຶກສາອິດສະລາມລົງຄະແນນສຽງວ່າເຂົາບໍ່ມີຄວາມສາມາດ.

ຕອນເຊົ້າວັນທີ 9 ມີນາ, ສື່ມວນຊົນຂອງລັດອີຣານ ປະກາດວ່າ ອີຣານໄດ້ແຕ່ງຕັ້ງ ໂມຈຕາບາ ຄາເມເນອີ (Mojtaba Khamenei) ເປັນຜູ້ນໍາສູງສຸດຄົນໃໝ່ຂອງປະເທດ, ໂມຈຕາບາ ໄດ້ຮັບການເລືອກຕັ້ງໂດຍສະພາຜູ້ຊ່ຽວຊານ; ນັບຕັ້ງແຕ່ການສ້າງຕັ້ງສາທາລະນະລັດອິດສະລາມອີຣານ ໃນປີ 1979, ສະພານີ້ ໄດ້ເລືອກຕັ້ງຜູ້ນໍາຄົນໃໝ່ພຽງຄັ້ງດຽວ ນັ້ນຄືຄັ້ງທີ່ ອາລີ ຄາເມເນອີ ໄດ້ຮັບການເລືອກຕັ້ງຢ່າງຮີບດ່ວນຫຼັງຈາກການເສຍຊີວິດຂອງ ຣູຮອນລາ ໂຄໄມນີ (Ruhollah Khomeini) ເມື່ອຫຼາຍກວ່າສາມທົດສະວັດກ່ອນ (1989).

ໂມຈຕາບາ ເກີດໃນວັນທີ 8 ກັນຍາ 1969 ປັດຈຸບັນມີອາຍຸ 56 ປີ, ເປັນລູກຊາຍຄົນທີສອງຂອງ ອາລີ ຄາເມເນອີ ໂດຍເປັນທີ່ຮູ້ຈັກດີວ່າເຂົາມີອິດທິພົນຢ່າງສູງຢູ່ເບື້ອງຫຼັງ ແລະ ມີສາຍພົວພັນທີ່ແໜ້ນແຟ້ນກັບກອງທະ ຫານປ້ອງກັນການປະຕິວັດອິດສະລາມ (Islamic Revolutionary Guard Corps-IRGC) ລວມທັງກອງກໍາລັງເຄິ່ງທະຫານອາສາສະໝັກບາຊິຈ (Basij); ໂມຈຕາບາ ບໍ່ແມ່ນນັກບວດລະດັບສູງ ແລະ ບໍ່ມີບົດບາດທາງການໃນລະບອບການປົກຄອງ, ເຂົາຖືກສະຫະລັດຂວໍ້າບາດໃນປີ 2019 ໂດຍກະຊວງການເງິນຂອງສະຫະລັດກ່າວຫາວ່າເຂົາເຮັດວຽກຢ່າງໃກ້ຊິດກັບຜູ້ບັນຊາການກອງກໍາລັງກຸດສ໌ (IRGC-Quds Force) ແລະ Basij ເພື່ອຢູ່ເບື້ອງຫຼັງສິ່ງທີ່ສະຫະລັດກ່າວອ້າງວ່າເປັນ "ຄວາມທະເຍີທະຍານທີ່ເຮັດໃຫ້ເກີດຄວາມບໍ່ໝັ້ນຄົງໃນພາກພື້ນ ແລະ ຈຸດປະສົງໃນການກົດຂີ່ຂົ່ມເຫັງພາຍໃນປະເທດ" ຂອງພໍ່ເຂົາ.

**ສິ່ງທີ່ທ່ານຄວນຮູ້ກ່ຽວກັບຜູ້ນໍາສູງສຸດຄົນໃໝ່ຂອງອີຣານ:**

ເນື່ອງຈາກສູນເສຍຍາດພີ່ນ້ອງຫຼາຍຄົນຈາກການໂຈມຕີຂອງສະຫະລັດ ແລະ ອິດສະຣາແອນແລະດໍາລົງຊີວິດຢູ່ພາຍໃຕ້ມາດຕະການຂວໍ້າບາດຂອງສະຫະລັດມາເປັນເວລາດົນນານ, ຜູ້ນໍາຄົນໃໝ່ຈຶ່ງຍຶດໝັ້ນໃນຈຸດຢືນທີ່ແຂງກະດ້າງ (hardline ແນວທາງສາຍແຂງ) ຕໍ່ຕ້ານຕາເວັນຕົກມາໂດຍຕະຫຼອດ; ຜູ້ຊ່ຽວຊານກ່າວວ່າເຂົາອາດມີທ່າທີທີ່ແຂງກະດ້າງຕໍ່ສະຫະລັດ ແລະ ອິດສະຣາແອນ ຍິ່ງກວ່າພໍ່ຂອງເຂົາອີກ.

ນີ້ແມ່ນພາບລວມໂດຍຫຍໍ້ກ່ຽວກັບປະຫວັດຄວາມເປັນມາຂອງ ໂມຈຕາບາ ຄາເມເນອີ ແລະ ປະຕິກິລິຍາຈາກທົ່ວໂລກຕໍ່ການເລືອກຕັ້ງເຂົາເປັນຜູ້ນໍາສູງສຸດ.

**ໂມຈຕາບາ ຄາເມເນອີ ແມ່ນໃຜ?**

- ໂມຈຕາບາ ເກີດໃນເມືອງສັກສິດມາຊາດ (Mashhad) ຂອງອີຣານ; ຫຼັງຈາກເກີດການປະຕິວັດອິດສະລາມຂອງອີຣານ ໃນປີ 1979, ຄອບຄົວຂອງເຂົາຍ້າຍໄປຢູ່ທີ່ນະຄອນຫຼວງເຕເຮຣານ (Tehran).

- ຫຼັງຈາກຮຽນຈົບມັດທະຍົມຕອນປາຍ, ເຂົາໄດ້ເຂົ້າຮ່ວມກອງທະຫານປ້ອງກັນການປະຕິວັດອິດສະລາມ ແລະ ປະຕິບັດໜ້າທີ່ໃນໄລຍະທ້າຍຂອງສົງຄາມອີຣານ-ອີຣັກ; ຕໍ່ມາ ເຂົາໄດ້ສຶກສາດ້ານສາສະໜາຢູ່ເມືອງກອມ (Qom) ທາງພາກກາງຂອງອີຣານ ແລະ ຈາກນັ້ນ, ກໍກາຍເປັນຜູ້ຊ່ວຍທາງການເມືອງຂອງພໍ່ຂອງເຂົາ.

-ສື່ມວນຊົນອີຣານລາຍງານວ່າ ໂມຈຕາບາ ໄດ້ຊ່ວຍເຫຼືອພໍ່ຂອງເຂົາໃນການຈັດການວຽກງານທີ່ສໍາຄັນຂອງລັດ ມາເປັນເວລາດົນແລ້ວ, ໂດຍມີ "ຄວາມເຂົ້າໃຈຢ່າງເລິກເຊິ່ງ" ໃນເລື່ອງການບໍລິຫານທີ່ສໍາຄັນແລະຮັກສາສາຍພົວພັນການເຮັດວຽກກັບເຈົ້າໜ້າທີ່ລະດັບສູງຫຼາຍຄົນໃນລັດຖະບານຕ່າງໆ, ລວມທັງຜູ້ບັນຊາການທະຫານລະດັບສູງອີກດ້ວຍ.

- ປີ 2019 ໃນໄລຍະການດໍາລົງຕໍາແໜ່ງປະທານາທິບໍດີສະຫະລັດສະໄໝທໍາອິດຂອງ ດໍໂນລ ທຣໍາ, ລັດຖະບານສະຫະລັດໄດ້ຂຶ້ນບັນຊີດໍາ ໂມຈຕາບາ ໂດຍອ້າງເຖິງບົດບາດຂອງເຂົາໃນການປະຕິບັດບາງໜ້າທີ່ຂອງຜູ້ນໍາສູງສຸດຂອງອີຣານ.

- ເປັນເວລາຫຼາຍປີແລ້ວ ທີ່ເຂົາໄດ້ຮັບການຍ້ອງຍໍຢ່າງກວ້າງຂວາງວ່າເປັນຜູ້ທີ່ມີໂອກາດສູງທີ່ຈະສືບທອດຕໍາ ແໜ່ງຕໍ່ຈາກພໍ່ຂອງເຂົາ, ເຖິງແມ່ນວ່າເຂົາຈະເກັບຕົວງຽບແລະບໍ່ຄ່ອຍປາກົດຕົວຕໍ່ສາທາລະນະຊົນ.

**ເປັນຫຍັງຕ້ອງ ໂມຈຕາບາ ຄາເມເນອີ?**

- ສະມາຊິກຂອງສະພາຜູ້ຊ່ຽວຊານຂອງອີຣານກ່າວວ່າ ການເລືອກ ໂມຈຕາບາ ເປັນຜູ້ນໍາສູງສຸດຄົນໃໝ່ຂອງປະເທດ ໄດ້ຮັບການອະນຸມັດ "ໂດຍສຽງສ່ວນໃຫຍ່ຂອງສະພາຜູ້ຊ່ຽວຊານ".

- ໂມຈຕາບາ ໃຊ້ເວລາຫຼາຍປີໃນການສ້າງອິດທິພົນພາຍໃນກົນໄກທາງການເມືອງ ແລະ ຄວາມໝັ້ນຄົງຂອງອີຣານ. ອັບດຸນ ກາເດີ ຮໍາມັດ (Abdul Qader Hammad) ນັກວິເຄາະການເມືອງຊາວປາແລັດສະຕິນຈາກມະຫາວິທະຍາໄລອັລ-ອັກຊາ (Al-Aqsa) ໃນເຂດກາຊາ ຕັ້ງຂໍ້ສັງເກດເຖິງສາຍພົວພັນທີ່ໃກ້ຊິດຂອງ ໂມຈຕາບາ ກັບ IRGC ເຊິ່ງຊ່ວຍເສີມສ້າງຄວາມໜ້າເຊື່ອຖືຂອງເຂົາ ແລະ ເຮັດໃຫ້ສາມາດໄດ້ຮັບການສະໜັບສະໜູນຈາກກຸ່ມຫົວຮຸນແຮງ.

- ຄວາມຄຸ້ນເຄີຍກັບລະບົບການເມືອງອີຣານ ຍັງເປັນຂໍ້ໄດ້ປຽບສໍາລັບ ໂມຈຕາບາ. ຮໍາມັດ ກ່າວວ່າ: ໃນຖານະທີ່ເຄີຍເປັນຜູ້ຊ່ວຍຄົນສໍາຄັນຂອງຜູ້ນໍາສູງສຸດເປັນເວລາຫຼາຍປີ, ໂມຈຕາບາ ເຂົ້າໃຈຂະບວນການທີ່ຢູ່ເບື້ອງຫຼັງການຕັດສິນໃຈທາງນະໂຍບາຍທີ່ສໍາຄັນ ເຊິ່ງອາດຊ່ວຍອໍານວຍຄວາມສະດວກໃນການຖ່າຍໂອນອໍານາດຢ່າງລຽບງ່າຍ.

- ໃນໄລຍະເວລາວິກິດ, ທາງການອີຣານ ມັກເລືອກຜູ້ນໍາທີ່ໜ້າເຊື່ອຖື ແລະ ມີຄວາມສາມາດໃນການຮັກ ສາຄວາມຕໍ່ເນື່ອງທາງການເມືອງ; ໃນຖານະລູກຊາຍຂອງ ອາລີ ຄາເມເນອີ ຜູ້ນໍາສູງສຸດທີ່ດໍາລົງຕໍາແໜ່ງມາຍາວນານ, ໂມຈຕາບາ ຈຶ່ງຖືກເບິ່ງຢ່າງກວ້າງຂວາງວ່າເປັນຜູ້ທີ່ສາມາດຮັກສາທິດທາງປັດຈຸບັນຂອງປະເທດໃນໄລຍະເວລາທີ່ບໍ່ແນ່ນອນນີ້.

**ປະຕິກິລິຍາທົ່ວໂລກຕໍ່ການແຕ່ງຕັ້ງ ໂມຈຕາບາ ຄາເມເນອີ**

- ຫຼັງຈາກການປະກາດດັ່ງກ່າວ, ກອງທະຫານປ້ອງກັນການປະຕິວັດອິດສະລາມຂອງອີຣານ ໄດ້ປະຕິຍານທັນທີວ່າຈະຈົງຮັກພັກດີຕໍ່ຜູ້ນໍາສູງສຸດຄົນໃໝ່, ໂດຍສະແດງຄວາມພ້ອມທີ່ຈະປະຕິບັດຕາມຄໍາສັ່ງຂອງເຂົາ.

- ເມື່ອວັນຈັນທີ 9 ມີນາຜ່ານມາ, ຊາວອີຣານໄດ້ເຂົ້າຮ່ວມການຊຸມນຸມຂະໜາດໃຫຍ່ທົ່ວປະເທດເພື່ອສະແດງຄວາມຈົງຮັກພັກດີຕໍ່ ໂມຈຕາບາ ຄາເມເນອີ.

- ໃນວັນດຽວກັນ: ກຸ່ມຮູຕີ (Houthi) ໃນປະເທດເຢເມນ ເຊິ່ງໄດ້ຮັບການສະໜັບສະໜູນຈາກອີຣານ ໄດ້ສະແດງຄວາມຍິນດີຕໍ່ການຕັດສິນໃຈດັ່ງກ່າວ, ໂດຍອະທິບາຍວ່າເປັນສັນຍະລັກຂອງຄວາມສາມັກຄີແລະຄວາມເຂັ້ມແຂງພາຍໃນສາທາລະນະລັດອິດສະລາມ; ນາຍົກລັດຖະມົນຕີອີຣັກ ໂມຮໍາເມັດ ຊີອະອັລ-ຊູດານີ (Mohammed Shia' al-Sudani) ໄດ້ສົ່ງຄໍາອວຍພອນທີ່ດີໄປຍັງຜູ້ນໍາສູງສຸດທີ່ໄດ້ຮັບການເລືອກຕັ້ງໃໝ່, ໂດຍສະແດງຄວາມສາມັກຄີລະຫວ່າງອີຣັກ ກັບ ອີຣານ; ສຸລຕານ ໄຮທໍາ ບິນ ຕາຣິກ ອັລ ຊາອິດ (Sultan Haitham bin Tariq Al Said) ແຫ່ງລັດສຸລຕານໂອມານ ສະແດງຄວາມຍິນດີກັບ ໂມຈຕາບາ ຄາເມເນອີ ໃນໂອກາດທີ່ໄດ້ຮັບການແຕ່ງຕັ້ງເປັນຜູ້ນໍາສູງສຸດຄົນໃໝ່ຂອງອີຣານ; ປະທານາທິບໍດີ ວະລາດີມີ ປູຕິນ ແຫ່ງລັດເຊຍ ສົ່ງຂໍ້ຄວາມສະແດງຄວາມຍິນດີເຖິງ ໂມຈຕາບາ ຄາເມເນອີ, ໂດຍກ່າວວ່າລັດເຊຍ ເປັນ ແລະ ຈະຍັງສືບຕໍ່ເປັນພັນ ທະມິດທີ່ໜ້າເຊື່ອຖືຂອງອີຣານ; ໂຄສົກຂອງກະຊວງການຕ່າງປະເທດ ສປ ຈີນ ກ່າວວ່າ ການເລືອກຕັ້ງ ໂມຈຕາບາ ຄາເມເນອີ ເປັນຜູ້ນໍາສູງສຸດຄົນທີສາມຂອງອີຣານ ແມ່ນການຕັດສິນໃຈຕາມລັດຖະທໍາມະນູນຂອງປະເທດ.

ປະທານາທິບໍດີ ທຣໍາ ກ່າວກັບເວັບໄຊຂ່າວ Axios ຂອງສະຫະລັດວ່າ ເປັນເລື່ອງທີ່ "ຍອມຮັບບໍ່ໄດ້" ທີ່ ໂມຈຕາບາ ຄາເມເນອີ ຈະກາຍເປັນຜູ້ນໍາຄົນໃໝ່ຂອງອີຣານ, ໂດຍລະບຸວ່າຕົວເຂົາເອງ ຕ້ອງມີສ່ວນຮ່ວມໃນການເລືອກຜູ້ນໍາຄົນຕໍ່ໄປຂອງອີຣານດ້ວຍຕົນເອງ.

ເຝົ້າເບິ່ງ ໄດ້ຂີດຂຽນ
❖ ວິເສດ ສະແຫວງສຶກສາ

# ມາດຕະຖານໃໝ່ຂອງ ສ.ເກົາຫຼີ ໃນການຄັດເລືອກ ແຮງງານຕ່າງປະເທດ



ໃນບົດທີ່ທ່ານພວມອ່ານຢູ່ນີ້ ຜູ້ຂຽນໄດ້ຄັດຈ້ອນມາຈາກແຫຼ່ງຂ່າວຕ່າງປະເທດກ່ຽວກັບທາງການ ສ.ເກົາຫຼີ ກຳນົດມາດຕະຖານໃໝ່ສຳລັບແຮງງານໄຮ້ຝີມື (ແຮງງານດິບ) ທີ່ທາງການ ສ.ເກົາຫຼີ ຈະນຳເຂົ້າ. ປັດຈຸບັນ, ທາງການ ສ.ເກົາຫຼີ ໄດ້ອອກລະບຽບການໃໝ່ໃນການສຳພາດເພື່ອຄັດຈ້ອນເອົາແຮງງານທີ່ບໍ່ມີຄວາມຊຳນານງານດ້ານໃດດ້ານໜຶ່ງໂດຍສະເພາະ ແຕ່ຫາກມີຄວາມຈຳເປັນທີ່ຈະຕ້ອງໄດ້ນຳເຂົ້າ ເພື່ອເຮັດຢູ່ໃນຂົງເຂດການຜະລິດກະສິກຳ, ການຜະລິດສິນຄ້າ, ການປະມົງ ແລະ ການກໍ່ສ້າງ; ແຮງງານປະເພດນີ້ເອີ້ນວ່າ ວີຊາ E-g ເປັນວີຊາທີ່ອອກໃຫ້ສະເພາະແຮງງານທີ່ບໍ່ມີຄວາມຊຳນານງານ, ປັດຈຸບັນ ວີຊາ E-g ນີ້ ໄດ້ອອກໃຫ້ແຮງງານ 16 ປະເທດ ທີ່ເຮັດວຽກຢູ່ ສ.ເກົາຫຼີ.

ແນວໃດກໍດີ, ຫວ່າງມໍ່ໆນີ້ ທາງການ ສ.ເກົາຫຼີ ໄດ້ເພີ່ມມາດຕະການທີ່ຈຳເປັນໃນການຄັດເລືອກແຮງງານວີຊາ E-g ໂດຍເນັ້ນໃຫ້ແຮງງານທີ່ມີຄວາມສາມາດນຳໃຊ້ພາສາເກົາຫຼີໃນລະດັບທີ່ຈຳເປັນ; ນອກຈາກຮູ້ພາສາເກົາຫຼີແລ້ວ, ແຮງງານຕ້ອງມີຄວາມຮູ້ດ້ານຄວາມປອດໄພໃນສະຖານທີ່ເຮັດວຽກອີກດ້ວຍ.

ຂ່າວບອກວ່າ ແຮງງານວີຊາ E-g ທີ່ຜ່ານການຄັດເລືອກນັ້ນ ຈະສາມາດຢູ່ເຄື່ອນໄຫວແຮງງານໃນ ສ.ເກົາຫຼີ ໄດ້ເປັນເວລາ 4 ປີ ກັບ 10 ເດືອນ; ສາເຫດທີ່ຕ້ອງໄດ້ເພີ່ມ 2 ມາດຕະຖານໃໝ່ໃນການຄັດເລືອກແຮງງານປະເພດວີຊາE-gນີ້ກໍເພາະໄດ້ມີການສຳຫຼວດພົບວ່າ ນາຍຈ້າງເກົາຫຼີຈຳນວນ 48.7% ຍັງບໍ່ພໍໃຈກ່ຽວກັບຄວາມສາມາດດ້ານພາສາເກົາຫຼີຂອງແຮງງານຕ່າງປະເທດ. ສາເຫດທີ່ບໍ່ພໍໃຈກໍຍ້ອນວ່າ ແຮງງານທີ່ບໍ່ຮູ້ພາສາເກົາຫຼີດີນັ້ນພົບບັນຫາຫຍຸ້ງຍາກໃນການປະຕິບັດຂໍ້ແນະນຳໃນການເຮັດວຽກ (ການໃຊ້ເຄື່ອງໄດ້ ແລະ ລາຍລະອຽດຂອງວຽກ) ແລະ ພິເສດສຸດໆ ກໍຄືແຮງງານເຫຼົ່ານີ້ບໍ່ເຂົ້າໃຈລະບຽບການວ່າດ້ວຍຄວາມປອດໄພໃນບ່ອນເຮັດວຽກ; ເພື່ອແກ້ໄຂບັນຫາທີ່ເປັນອຸປະສັກເຫຼົ່ານີ້ໃຫ້ຕົກໄປ, ທາງການສ.ເກົາຫຼີຈະເຄັ່ງຄັດໃນການສຳພາດເພື່ອຄັດເລືອກແຮງງານປະເພດວີຊາE-gດ້ວຍການເພີ່ມຄວາມຮູ້ດ້ານພາສາເກົາຫຼີແລະຄວາມຮູ້ກ່ຽວກັບຄວາມປອດໄພໃນບ່ອນເຮັດວຽກ, ນອກຈາກນັ້ນມາດຕະຖານຄະແນນສອບຜ່ານກໍຈະຍົກສູງຂຶ້ນຕື່ມ.

ມາດຕະຖານຄັດເລືອກໃໝ່ນີ້ ເລີ່ມປະຕິບັດແຕ່ປີນີ້ເປັນຕົ້ນໄປ; ເພື່ອສ້າງເງື່ອນໄຂເອື້ອອຳນວຍສຳລັບແຮງງານ, ທາງການ ສ.ເກົາຫຼີ ໄດ້ຈັດພິມຄູ່ມືສົນທະນາເປັນພາສາເກົາຫຼີໂດຍເນັ້ນໃສ່ຂໍ້ແນະນຳທີ່ຈຳເປັນໃນການອອກແຮງງານ ກໍຄືຄວາມຮູ້ກ່ຽວກັບຄວາມປອດໄພໃນບ່ອນເຮັດວຽກ.

ຜູ້ຂຽນເຊື່ອວ່າຂ່າວນີ້ ຄົງເປັນຈຸດສົນໃຈໜຶ່ງສຳລັບແຮງງານລາວທີ່ຕ້ອງການໄປສານຝັນຢູ່ ສ.ເກົາຫຼີ ເພື່ອຈະໄດ້ກຽມຕົວໄວ້ແຕ່ເນີ່ນໆເຊັ່ນ: ຊອກຮຽນພາສາເກົາຫຼີ(ດຽວນີ້ກໍມີຫຼາຍບ່ອນເປີດສອນແລ້ວ) ແລະ ຊອກຮູ້ກ່ຽວກັບລະບົບເຮັດວຽກ ກໍຄືມາດຕະຖານຄວາມປອດໄພໃນບ່ອນເຮັດວຽກຂອງຂະແໜງການທີ່ຕົນຕ້ອງການໄປອອກແຮງງານ.




#ບ່າວກະບື

| | |
|---|---|
| ລົບ: | "ເມື່ອເຮົາມີປາກມີສຽງກັບບາງເມຍ, ເຮົາມັກຈະເປັນຜູ້ໃຊ້ຄຳເວົ້າຕັດສິນເດັດຂາດຢູ່ສະເໝີ" |
| ກຽດ: | "ເຮົາພູມໃຈທີ່ໄດ້ຊາບເລື່ອງນີ້, ໂຕພໍບອກເຮົາໄດ້ບໍ່ວ່າ ໂຕມີເຄັດລັບແບບໃດ?" |
| ລົບ: | "ມັນງ່າຍໆດອກ, ເຮົາພຽງແຕ່ອອກປາກຂໍໂທລາວ" |

#BAOKBU

| | |
|---|---|
| CHANH: | "When I have an argument with my wife, I always have the final word" |
| KIAT: | "I am glad to hear it, will you give me a hint as to how you manage it?" |
| CHANH: | "It's easy, I simply apologise" |

ທະນາຄານພັດທະນາລາວ
LDB Bank




## ຖອດຖອນ...

(ຕໍ່ຈາກໜ້າ 4)

ກັບ 20% ມາຈາກສູນກາງ 2 ທ່ານ; ຂັ້ນແຂວງ 8 ທ່ານ, ຍິງ 2 ທ່ານ, ເລືອກເອົາ 7 ທ່ານ ແລະ ລົງຮັບສະໝັກ ສສຂ 49 ທ່ານ, ຍິງ 15 ທ່ານ, ເທົ່າກັບ 30,61 %, ເລືອກເອົາ 35 ທ່ານ; ພ້ອມນັ້ນ, ຍັງສາມາດປະຕິບັດ 4 ຄາດໝາຍໄດ້ ຄື: ຜູ້ມີສິດເລືອກຕັ້ງມາປ່ອນບັດເລືອກຕັ້ງປະຕິບັດໄດ້84,91%,ຄາດໝາຍ 100%; ຜູ້ມີສິດເລືອກຕັ້ງຮູ້ໃຊ້ສິດໃນການປ່ອນບັດເລືອກຕັ້ງ ຖືກຕ້ອງຕາມລະບຽບການເລືອກຕັ້ງ ປະຕິບັດໄດ້ 100%;ສາມາດຮັບປະກັນວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ມີຄວາມສະຫງົບ ແລະ ມີຄວາມປອດໄພປະຕິບັດໄດ້100%;ຮັບປະກັນການປ່ອນບັດເລືອກຕັ້ງ ມີຄວາມໂປ່ງໃສ ແລະ ສຳເລັດທັນຕາມກຳນົດເວລາປະຕິບັດໄດ້100%; ທົ່ວແຂວງ ມີໜ່ວຍປ່ອນບັດເລືອກຕັ້ງທັງໝົດ 208 ໜ່ວຍ ມີຜູ້ມີສິດປ່ອນບັດເລືອກຕັ້ງທັງໝົດ 215,335 ຄົນ, ຍິງ 106,373 ຄົນ ແລະ ມີຜູ້ໄປໃຊ້ສິດເລືອກຕັ້ງທັງໝົດ 182,860 ຄົນ, ກວມເອົາ 84,91%ຂອງຜູ້ມີສິດປ່ອນບັດເລືອກຕັ້ງ.ກອງປະຊຸມຍັງໄດ້ຮັບຟັງການປະກອບຄຳເຫັນ ຈາກປະທານຄະນະກຳມະການເລືອກຕັ້ງຂັ້ນເມືອງ, ຫົວໜ້າອານຸກຳມະການຕ່າງໆ ໂດຍຍົກບັນຫາທີ່ຍັງຄົງຄ້າງ ແລກປ່ຽນຖອດຖອນບົດຮຽນຮ່ວມກັນ ເພື່ອເປັນບ່ອນອີງພື້ນຖານໃຫ້ແກ່ບັ້ນເລືອກຕັ້ງຄັ້ງຕໍ່ໄປ.

ທ່ານ ສອນທະນູ ທຳມະວົງຕາງໜ້າໃຫ້ອານຸກຳມະການເລືອກຕັ້ງລະດັບຊາດ ຍັງໄດ້ມອບລົດຈັກ 7 ຄັນ, ຄອມພິວເຕີ 14 ເຄື່ອງ ແລະ ປິ່ນເຕີ 7 ເຄື່ອງ ໃຫ້ແກ່ຫ້ອງວ່າການສະພາປະຊາຊົນ ປະຈຳເຂດເລືອກຕັ້ງ 7 ຕົວເມືອງເພື່ອນຳໃຊ້ເຂົ້າໃນວຽກງານຕື່ມອີກ.

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ປອ. ພົດສະໄໝ ບຸນວິໄລ

**ຄະນະບັນນາທິການ**
ທ່ານ ສຸລະສັກ ສຸວັນນະວົງ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ
**ຮູບພາບປະກອບ**
ທ່ານ ສອນສັກ ວັນວິໄຊ